# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-12 ພະຈິກ 2022

ປີທີ 11

ສະບັບທີ 890


## ປະທານສະພາແຫ່ງຊາດ ຕ້ອນຮັບຄະນະຜູ້ແທນອາດີດທະຫານອາສາສະໝັກ-ຊ່ຽວຊານ ຫວຽດນາມ

(ສພຊ) ວັນທີ 7 ພະຈິກ 2022 ທີ່ສະພາແຫ່ງຊາດ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ຕ້ອນຮັບຄະນະຜູ້ແທນຄະນະປະສານງານທົ່ວປະເທດ ອາດີດທະຫານອາສາສະໝັກ-ຊ່ຽວຊານ ຫວຽດນາມ ຊ່ວຍເຫລືອການປະຕິວັດລາວ ທີ່ມາຢ້ຽມຢາມຄັ້ງນີ້ຢູ່ໃນບັນຍາກາດທີ່ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ພວມພ້ອມກັນສະເຫລີມສະຫລອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ ປີ 2022 ຢ່າງເປັນຂະບວນຟົດຟື້ນ ແລະ ມີຄວາມໝາຍສຳຄັນອັນເລິກເຊິ່ງ.





ສະຫາຍ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ກ່າວສະແດງຄວາມຕ້ອນຮັບວ່າ: ຕາງໜ້າໃຫ້ສະພາແຫ່ງຊາດ ແຫ່ງ ສປປລາວ ກໍຄື ປະຊາຊົນລາວບັນດາເຜົ່າ, ຂໍສະແດງຄວາມຮູ້ບຸນຄຸນຢ່າງລົ້ນເຫລືອຕໍ່ບັນດາສະຫາຍອາດີດທະຫານອາສາສະໝັກ-ຊ່ຽວຊານ ຫວຽດນາມ ຊ່ວຍເຫລືອການປະຕິວັດລາວ ທີ່ໄດ້ສະຫລະເລືອດເນື້ອ, ຄວາມສຸກສ່ວນຕົວ ຄຽງບ່າຄຽງໄຫລ່, ຮ່ວມສຸກ, ຮ່ວມທຸກ, ຮ່ວມຊຸມຄອງກັບປະຊາຊົນລາວຕໍ່ສູ້ກູ້ຊາດຕ້ານສັດຕູຜູ້ມາຮຸກຮານໃນປາງສົງຄາມ ຈົນເຮັດໃຫ້ປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ. ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ເວລາໃດກໍຈະຈົດຈຳບຸນຄຸນ, ຄຸນງາມຄວາມດີຂອງບັນດາສະຫາຍ ແລະ ຈະສືບຕໍ່ສຶກສາອົບຮົມຊາວໜຸ່ມ, ເຍົາວະຊົນ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໃຫ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງຕໍ່ສາຍພົວພັນອັນພິເສດ ລາວ-ຫວຽດນາມ ທີ່ຫາຍາກ ແລະ ມີໜຶ່ງດຽວໃນໂລກ ໂດຍສະເພາະແມ່ນການເສຍສະຫລະອັນໃຫຍ່ຫລວງຂອງການນຳປະຕິວັດຮຸ່ນກ່ອນ ເພື່ອເສີມຂະຫຍາຍສາຍພົວພັນອັນພິເສດ, ບໍລິສຸດຜຸດຜ່ອງ ລະຫວ່າງ ສອງປະເທດ ດັ່ງຄຳເວົ້າທີ່ວ່າ "ເຂົ້າເມັດຫັກຜັກເສັ້ນແບ່ງ" ເປັນການປູກຝັງ ໃຫ້ລູກຫລານຮຸ່ນໜຸ່ມ ຂອງສອງປະເທດ ມີຄວາມເຂົ້າໃຈ, ມີຄວາມຮັບຜິດຊອບ, ຖະນຸຖະໜອມ ແລະ ປົກປັກຮັກສາ ສາຍພົວພັນພິເສດດັ່ງກ່າວ ໃຫ້ຍືນຍົງຄົງຕົວຕະຫລອດການະນານ.

(ຂ່າວ: ນາງ ກຸກກິກ ບຸດດາໄຊ ແລະ ພາບ: ສອນສັກ ວັນວິໄຊ)

## ການນຳພັກ-ລັດ ແລະ ມວນຊົນ ຮ່ວມໃສ່ບາດ ບຸນມະນັດສະການພຣະທາດຫລວງ ປະຈຳປີ 2022



ໜ້າ 2

## ສຳເລັດກອງປະຊຸມປະຈຳປີ ຂອງຄະນະເລຂາທິການສະພາແຫ່ງຊາດ

(ສພຊ) ໃນລະຫວ່າງວັນທີ 7-8 ພະຈິກ 2022 ທີ່ຫໍສະພາແຫ່ງຊາດ ໄດ້ສຳເລັດກອງປະຊຸມປະຈຳປີຂອງຄະນະເລຂາທິການສະພາແຫ່ງຊາດ ຮ່ວມກັບອົງການຈັດຕັ້ງພາຍໃນສະພາແຫ່ງຊາດ ແລະ ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ, ເຂົ້າຮ່ວມມີທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ມີບັນດາທ່ານຮອງເລຂາທິການສະພາແຫ່ງ, ບັນດາທ່ານຮອງປະທານກຳມາທິການ, ເລຂາທິການສະພາປະຊາຊົນຂັ້ນແຂວງທົ່ວປະເທດ, ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ຫົວໜ້າ-ຮອງ



ອ່ານຕໍ່ໜ້າ 2

## ກອງປະຊຸມຄົບຄະນະ ກວທສ ປະຈຳປີ 2022

(ສພຊ) ກອງປະຊຸມຄົບຄະນະກຳມາທິການວັດທະນະທຳ-ສັງຄົມ (ກວທສ) ປະຈຳປີ 2022 ໄດ້ຈັດຂຶ້ນໃນລະຫວ່າງວັນທີ 7-8 ພະຈິກ 2022 ທີ່ນະຄອນຫລວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດ

ອ່ານຕໍ່ໜ້າ 2



## ຮອງປະທານ ສພຊ ຕິດຕາມກວດກາການແກ້ໄຂ ຜົນກະທົບໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳອູ 4

(ສພຊ) ໃນລະຫວ່າງວັນທີ 31 ຕຸລາ -1 ພະຈິກ 2022, ທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍທີມງານ ໄດ້ເຄື່ອນໄຫວຕິດຕາມ ກວດກາ ກ່ຽວກັບການແກ້ໄຂຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳອູ 4 ທີ່ເມືອງຂວາ ແຂວງຜົ້ງສາລີ ໂດຍການຕ້ອນຮັບຂອງທ່ານ ທອງສີ ເສົາສຸລິພົມ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 2 ພ້ອມດ້ວຍຄະນະ.

ໃນໂອກາດເຄື່ອນໄຫວຄັ້ງນີ້, ຄະນະທີມງານສະພາແຫ່ງຊາດ, ສະພາປະຊາຊົນແຂວງ ສົມທົບກັບພາກສ່ວນກ່ຽວຂ້ອງຂັ້ນແຂວງ ແລະ ອົງການປົກຄອງເມືອງ ໄດ້ໄປຢ້ຽມຢາມເຂື່ອນໄຟຟ້ານ້ຳອູ 4, ເບິ່ງພື້ນທີ່ຕົວຈິງ

ອ່ານຕໍ່ໜ້າ 3

## ປະທານ ກຕທ ພົບປະກັບຜູ້ບໍລິຫານພາກພື້ນລຸ່ມແມ່ນ້ຳຂອງ



(ສພຊ) ວັນທີ 3 ພະຈິກ 2022 ທີ່ສະພາແຫ່ງຊາດ, ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ (ກຕທ) ພ້ອມດ້ວຍຄະນະ ໄດ້ມີການພົບປະ ແລະ ເຮັດວຽກ ກັບທ່ານ ນາງ Maria E. Goravanchi ຜູ້ອຳນວຍການບໍລິຫານພາກພື້ນລຸ່ມແມ່ນ້ຳຂອງ, ອົງການຮ່ວມມືດ້ານການພັດທະນາການ

ອ່ານຕໍ່ໜ້າ 3

## ສ້າງຄວາມເຂັ້ມແຂງໃຫ້ລັດຖະກອນພາຍໃນກົມສື່ມວນຊົນ



ໜ້າ 3



ໜ້າ 4



ໜ້າ 4



ໜ້າ 4



ໜ້າ 5



ໜ້າ 5



ໜ້າ 5



## ການນຳ...

ໃນຕອນເຊົ້າວັນທີ 8 ພະຈິກ 2022, ຢູ່ທີ່ເດີ່ນພຣະທາດຫລວງນະຄອນຫລວງວຽງຈັນ ໄດ້ມີພິທີໃສ່ບາດຖວາຍສັງຄະທານແດ່ພະສົງ-ສາມະເນນ ເນື່ອງໃນໂອກາດບຸນນະມັດສະການພຣະທາດຫລວງວຽງຈັນ ປະຈຳປີ 2022 ໂດຍການເຂົ້າຮ່ວມຂອງທ່ານ ທອງລຸນ ສີສຸລິດ ປະທານປະເທດແຫ່ງ ສປປລາວ, ທ່ານ ພັນຄຳ ວິພາວັນ ນາຍົກລັດຖະມົນຕີ ແຫ່ງ ສປປລາວ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດແຫ່ງ ສປປລາວ ພ້ອມດ້ວຍການນຳພັກ-ລັດຂັ້ນສູນກາງ, ນະຄອນຫລວງ, ເມືອງ ແລະ ມວນຊົນຊາວລາວ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມຈຳນວນຫລວງຫລາຍ ພ້ອມໃຈກັນໄປໃສ່ບາດຢາດນ້ຳຕາມຮີດຄອງປະເພນີທີ່ເຄີຍປະຕິບັດກັນມາ.

ບຸນນະມັດສະການພຣະທາດຫລວງວຽງຈັນປີນີ້ ມີຫລາຍກິດຈະກຳ ເປັນຕົ້ນແມ່ນພິທີທາງສາສະໜາ, ການແຫ່ຜາສາດເຜິ້ງ, ການວຽນທຽນ, ການແຂ່ງຂັນກິລາຕີຄີ, ການວາງສະແດງສິນຄ້າ ແລະ ອື່ນໆ ເພື່ອຮັກສາ ແລະ ເສີມຂະຫຍາຍວັດທະນະທຳ ຮີດຄອງປະເພນີທີ່ສືບທອດກັນມາ ແລະ ເພື່ອຄວາມເປັນສິຣິມຸງຄຸນ.

ບຸນນະມັດສະການພຣະທາດຫລວງປີນີ້ ເຫັນວ່າມວນຊົນຈາກທຸກທົ່ວສາລະທິດ ຕ່າງກໍມີຈິດໃຈໃສສັດທາ, ຫລັ່ງໄຫລມາຮ່ວມງານຢ່າງຄັບຄາໜາແໜ້ນ ແລະ ໄດ້ພ້ອມກັນໃສ່ບາດ, ຢາດນ້ຳ, ຮັບພອນ ແລະ ຟັງທຳມະເທສະໜາ ເພື່ອອຸທິດບຸນກຸສົນໃຫ້ບັນພະບູລຸດ ແລະ ເຈົ້າກຳນາຍເວນ ຕາມຄວາມເຊື່ອຂອງຊາວພຸດ ທີ່ສືບທອດກັນມາແຕ່ດົນນານ ໂດຍພິທີໃສ່ບາດໄດ້ເລີ່ມແຕ່ເວລາ 7:00 ໂມງ ຂອງວັນທີ 8 ພະຈິກ 2022 ກົງກັບມື້ເພັງ 15 ຄ່ຳ ເດືອນ 12 ພສ.2565.

## ສຳເລັດ...

ຫົວໜ້າກົມ ແລະ ພະນັກງານ-ລັດຖະກອນ ທີ່ຂຶ້ນກັບຄະນະເລຂາທິການສະພາແຫ່ງຊາດ ເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງບົດສະຫລຸບການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງຄະນະເລຂາທິການສະພາແຫ່ງຊາດ; ເຜີຍແຜ່ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຜູ້ປະສານງານກັບລັດຖະບານ ແລະ ນິຕິກຳອື່ນຈຳນວນໜຶ່ງ; ການປະກອບຄຳເຫັນແລກປ່ຽນບົດຮຽນຂອງຄະນະເລຂາທິການສະພາປະຊາຊົນແຂວງ 3 ແຂວງຄື: ອຸດົມໄຊ, ຫົວພັນ ແລະ ແຂວງວຽງຈັນ.

ໂອກາດດັ່ງກ່າວ, ທ່ານ ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມວ່າ: ໃນໄລຍະ 1 ປີທີ່ຜ່ານມາ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ສຸມໃສ່ປະຕິບັດໜ້າທີ່ວຽກງານຂອງຕົນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາແຫ່ງຊາດ ເຊິ່ງໄດ້ຮັບຜົນສຳເລັດຫລາຍດ້ານ ເປັນຕົ້ນ ການເປັນເສນາທິການເນື້ອໃນຮອບດ້ານ, ການກະກຽມໃຫ້ແກ່ການດຳເນີນກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ພົ້ນເດັ່ນແມ່ນການປະສານສົມທົບກັບກຳມາທິການໃນການປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດ ເຮັດໃຫ້ການຕົກລົງບັນຫາສຳຄັນຂອງຊາດ ກໍຄືບັນຫາການສ້າງ ແລະ ປັບປຸງກົດໝາຍ, ການຕິດຕາມກວດກາການປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ໄດ້ຮັບຜົນສຳເລັດ ແລະ ມີປະສິດທິຜົນນັບມື້ດີຂຶ້ນ; ການເປັນເສນາທິການໃຫ້ແກ່ຄະນະພັກ, ຄະນະປະຈຳສະພາແຫ່ງຊາດ ໃນການສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກພາຍໃນສະພາແຫ່ງຊາດ, ການປັບປຸງກົງຈັກການຈັດຕັ້ງ, ການບັນຈຸຊັບຊ້ອນພະນັກງານ ກໍໄດ້ຮັບຜົນສຳເລັດເປັນກ້າວໆ; ການຄຸ້ມຄອງ ແລະ ນຳໃຊ້ງົບປະມານໃນເງື່ອນໄຂສະພາບເສດຖະກິດ-ການເງິນ ມີຄວາມຫຍຸ້ງຍາກ ໄດ້ສູ້ຊົນປະຕິບັດຕາມນະໂຍບາຍປະຢັດມັດທະຍັດ ແລະ ປະຕິບັດຕາມລະບຽບການ ແລະ ວິໄນ ດ້ານການເງິນ; ການຈັດຕັ້ງປະຕິບັດວຽກບໍລິຫານ-ພິທີການ ໂດຍສະເພາະການຄຸ້ມຄອງຈໍລະຈອນເອກະສານ, ວຽກງານພິທີການ, ການຄຸ້ມຄອງນຳໃຊ້ພາຫະນະ ແລະ ການກໍ່ສ້າງພື້ນຖານໂຄງລ່າງທີ່ຂຶ້ນກັບສະພາແຫ່ງຊາດ ກໍໄດ້ຮັບການຈັດຕັ້ງປະຕິບັດ ແລະ ມີຜົນສຳເລັດຫລາຍດ້ານ; ວຽກຄຸ້ມຄອງຫໍສະພາແຫ່ງຊາດ ເຖິງວ່າເປັນກົງຈັກທີ່ສ້າງຂຶ້ນໃໝ່ ກໍໄດ້ມີຄວາມບຸກບືນຫ້າວຫັນ ເຮັດໃຫ້ວຽກງານແຕ່ລະດ້ານ ໄດ້ຮັບຜົນສຳເລັດດີພໍຄວນ; ການເປັນເສນາທິການໃຫ້ຄະນະພັກ, ຄະນະກວດກາພັກ-ລັດ ຂອງສະພາແຫ່ງຊາດ ໄດ້ຮັບຜົນສຳເລັດຫລາຍດ້ານ, ສາມາດກວດກາ ແລະ ແກ້ໄຂປາກົດການຫຍໍ້ທໍ້ຕາມລະບຽບກົດໝາຍ ເຊິ່ງເປັນສ່ວນປະກອບສຳຄັນໃຫ້ແກ່ການເຄື່ອນໄຫວຈັດຕັ້ງປະຕິບັດພາລະບົດບາດຂອງສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ທັງເປັນການປະກອບສ່ວນເຮັດໃຫ້ບົດບາດຂອງສະພາແຫ່ງຊາດ ໄດ້ຮັບການເຊີດຊູນັບມື້ສູງຂຶ້ນ ທັງຢູ່ພາຍໃນ ແລະ ໃນເວທີພາກພື້ນ ແລະ ສາກົນ.

(ຂ່າວ: ນາງ ກຸກກິກ ບຸດດາໄຊ, ພາບ: ສອນສັກ ວັນວິໄຊ)



## ກອງປະຊຸມ...

ທະນະທຳ-ສັງຄົມ ສະພາແຫ່ງຊາດ, ເຂົ້າຮ່ວມມີທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ຜູ້ຊີ້ນຳກຳມາທິການດັ່ງກ່າວ, ມີບັນດາທ່ານລັດຖະມົນຕີທີ່ກ່ຽວຂ້ອງ, ບັນດາທ່ານຮອງປະທານກຳມາທິການພາຍໃນສະພາແຫ່ງຊາດ,ບັນດາສະມາຊິກສະພາແຫ່ງຊາດ (ສສຊ) ທີ່ສັງກັດຢູ່ໃນກຳມາທິການ ຈາກ 18 ເຂດເລືອກຕັ້ງທົ່ວປະເທດ ພ້ອມດ້ວຍແຂກຖືກເຊີນ.



ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອສະຫລຸບຕີລາຄາ ແລະ ຖອດຖອນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງກຳມາທິການ ປະຈຳປີ 2022 ແລະ ກຳນົດທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023; ພ້ອມທັງເປັນການປຶກສາຫາລື ແລະ ສ້າງຄວາມເປັນເອກະພາບຕໍ່ບັນດາເນື້ອໃນທີ່ຈະນຳເຂົ້າຜ່ານໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ເພື່ອເຜີຍແຜ່ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຄະນະສະມາຊິກສະພາແຫ່ງຊາດ ເພດຍິງ ຊຸດທີ IX.

ໃນກອງປະຊຸມໄດ້ຮັບຟັງບົດສະຫລຸບຕີລາຄາການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວ ປີ 2023 ຂອງກຳມາທິການ; ບົດສັງລວມສະພາບການຈັດຕັ້ງປະຕິບັດບັນດາຄາດໝາຍປະຈຳປີ 2022 ແລະ ແຜນຄາດຄະເນປະຈຳປີ 2023 ໃນຂົງເຂດວັດທະນະທຳ-ສັງຄົມ; ຮັບຟັງການປະກອບຄຳເຫັນຂອງບັນດາພາກສ່ວນຕ່າງໆຂັ້ນສູນກາງ ເປັນຕົ້ນ: ກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ,ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ອົງການກາແດງແຫ່ງຊາດ; ບົດລາຍງານຜົນການຕິດຕາມກວດກາ ກ່ຽວກັບການສ້າງວິຊາຊີບ, ການພັດທະນາສີມືແຮງງານ, ການສ້າງວຽກເຮັດງານທຳຂອງປະຊາຊົນ ເພື່ອແກ້ໄຂບັນຫາການວ່າງງານ; ຮ່າງຄຳຊັກຖາມໃນຂົງເຂດວັດທະນະທຳ-ສັງຄົມ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX; ຮ່າງຄຳຊັກຖາມຫົວຂໍ້ຕິດຕາມສະເພາະກ່ຽວກັບການສ້າງວິຊາຊີບ, ການພັດທະນາສີມືແຮງງານ, ການສ້າງວຽກເຮັດງານທຳຂອງປະຊາຊົນ ເພື່ອແກ້ໄຂບັນຫາການວ່າງງານ; ເຜີຍແຜ່ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຄະນະສະມາຊິກສະພາແຫ່ງຊາດ ເພດຍິງ ຊຸດທີ IX.ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ.

ໂອກາດດັ່ງກ່າວ, ທ່ານ ຄຳໃບ ດຳລັດ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມວ່າ: ຕາງໜ້າຄະນະປະຈຳສະພາແຫ່ງຊາດຂໍສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ກຳມາທິການວັດທະນະທຳ-ສັງຄົມ ກໍຄືບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ເປັນກຳມະການຂອງກຳມາທິການ ທີ່ໄດ້ມີຄວາມເອົາໃຈໃສ່, ມີຄວາມພະຍາຍາມສູງໃນການນຳພາການເຄື່ອນໄຫວປະຕິບັດວຽກງານໃນໄລຍະ 1 ປີຜ່ານມາ (2022); ພ້ອມນັ້ນ, ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ເນັ້ນໜັກໃຫ້ບັນດາຜູ້ເຂົ້າຮ່ວມກອງປະຊຸມເອົາໃຈໃສ່ທົບທວນຄືນ, ກຳແໜ້ນທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງກຳມາທິການວັດທະນະທຳ-ສັງຄົມ ຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ເລກທີ 167/ຄປຈ, ລົງວັນທີ 05/07/2021; ກຳແໜ້ນແຜນວຽກຈຸດສຸມຂອງສະພາແຫ່ງຊາດ ເປັນຕົ້ນວຽກງານການສ້າງ ແລະ ປັບປຸງກົດໝາຍ; ຕ້ອງກຳແໜ້ນແຜນການເຄື່ອນໄຫວຂອງສະພາແຫ່ງຊາດ 2023-2025 ໂດຍຕິດພັນກັບຂົງເຂດວັດທະນະທຳ-ສັງຄົມ ນັບທັງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ຂອງລັດຖະບານ ເປັນຕົ້ນແມ່ນການຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດບັນດາຕົວຊີ້ວັດ (ຄາດໝາຍ) ຂອງຂະແໜງການວັດທະນະທຳ-ສັງຄົມ;ສືບຕໍ່ເອົາໃຈໃສ່ຕິດຕາມກວດກາວຽກງານຂົງເຂດວັດທະນະທຳ-ສັງຄົມ ເປັນຕົ້ນຂະແໜງການສຶກສາ ເຊິ່ງປັດຈຸບັນເຫັນວ່າມີຜົນກະທົບດ້ານສັງຄົມຢູ່ບໍ່ໜ້ອຍ ເປັນຕົ້ນອັດຕາການເຂົ້າຮຽນໃນຊັ້ນຕ່າງໆ, ສະພາບການຮຽນ-ການສອນ ຢູ່ເຂດຊົນນະບົດ-ເຂດຫ່າງໄກສອກຫລີກ; ຂົງເຂດແຮງງານ ແລະ ສະຫວັດດີການສັງຄົມ ການຕິດຕາມ ການປັບປຸງຄຸນນະພາບຂອງແຮງງານ (ຄວາມເຂັ້ມແຂງຂອງແຮງງານ), ການສ້າງວຽກເຮັດງານທຳ, ການແຕກໂຕນກັນ ລະຫວ່າງສັງຄົມຊົນນະບົດ ແລະ ສັງຄົມຕົວເມືອງ; ຮຽກຮ້ອງໃຫ້ບັນດາທ່ານລົງເລິກບັນດາວຽກງານໃນຂົງເຂດຄວາມຮັບຜິດຊອບຂອງຕົນ ແລະ ຂົງເຂດຂອງກຳມາທິການວັດທະນະທຳ-ສັງຄົມ ເພື່ອລົງເລິກ, ກຳແໜ້ນບັນຫາ; ພ້ອມນັ້ນ, ກໍໃຫ້ເອົາໃຈໃສ່ໃນລະບົບການສ່ອງແສງລາຍງານ ໃຫ້ກຳມາທິການເດືອນລະເທື່ອຕາມໜ້າວຽກຕົວຈິງ; ກຳມາທິການ ສືບຕໍ່ເອົາໃຈໃສ່ເພີ່ມທະວີວຽກງານການສ້າງຄວາມເຂັ້ມແຂງ ເປັນຕົ້ນແມ່ນການເຝິກອົບຮົມໃຫ້ ສສຊ ທີ່ເປັນກຳມະການຂອງກຳມາທິການ, ຕະຫລອດຮອດພະນັກງານທີ່ເປັນເສນາທິການຂົງເຂດວັດທະນະທຳ-ສັງຄົມ ເພື່ອຍົກລະດັບຄວາມຮູ້-ຄວາມສາມາດ ໃຫ້ມີຄວາມເລິກເຊິ່ງ ແລະ ເຂັ້ມແຂງຂຶ້ນເປັນກ້າວໆ.

(ກົງທະນູຄຳ ພິພັດເສລີ)



## ຮອງປະທານ...

ແລະ ປະຊຸມຮ່ວມກັບບ້ານທີ່ຖືກຜົນກະທົບຈາກໂຄງການ ຢູ່ທີ່ບ້ານຫ້ວຍພຸກ ເມືອງຂວາ ແຂວງຜົ້ງສາລີ ໂດຍມີ 6 ບ້ານ ເຂົ້າຮ່ວມຄື: ຫາດອາຍ, ຫ້ວຍຫລີກ, ຫ້ວຍສອຍ, ອີມລຸງ, ຫ້ວຍແພອູ ແລະ ຫວ້ຍພຸກ ທີ່ຂຶ້ນກັບກຸ່ມຫ້ວຍແອ່ນ ເມືອງຂວາ ແຂວງຜົ້ງສາລີ; ພ້ອມນັ້ນ, ໄດ້ຮັບຟັງທ່ານເລຂາຄະນະພັກຮາກຖານກຸ່ມຫ້ວຍແອ່ນ ລາຍງານໂດຍຫຍໍ້ກ່ຽວກັບສະພາບລວມການຈັດຕັ້ງປະຕິບັດການຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ພ້ອມທັງຮັບຟັງຄຳຄິດເຫັນ, ຄຳສະເໜີຂອງປະຊາຊົນຈຳນວນໜຶ່ງ; ຈາກນັ້ນ, ບັນດາທ່ານທີມງານຈາກສະພາແຫ່ງຊາດ, ພາກສ່ວນກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ໂດຍສະເພາະໜ່ວຍງານ RMU ໄດ້ປະກອບຄຳເຫັນ, ອະທິບາຍຊີ້ແຈງໃຫ້ປະຊາຊົນຮັບຮູ້ ແລະ ເຂົ້າໃຈ ຕໍ່ແນວທາງໃນການພັດທະນາຂອງໂຄງການ ກໍຄືແນວທາງການພັດທະນາຂອງລັດຖະບານ, ຂອງແຂວງ ແລະ ຂອງເມືອງ. ໃນຕອນທ້າຍ, ປະທານກອງປະຊຸມ ໄດ້ມີຄຳເຫັນໂອ້ລົມເຊິ່ງທ່ານໄດ້ເນັ້ນໃຫ້ພາກສ່ວນກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ປະສານສົມທົບກັບຜູ້ພັດທະນາໂຄງການ ພ້ອມກັນປຶກສາຫາລື, ນຳເອົາບັນຫາທີ່ປະຊາຊົນສະເໜີໄປຄົ້ນຄວ້າແກ້ໄຂໃຫ້ລະອຽດ ຈະແຈ້ງຕື່ມ ຕາມຂອບເຂດຄວາມຮັບຜິດຊອບຂອງແຕ່ລະຂັ້ນ ແລະ ໃກ້ຊິດຕິດແທດກັບປະຊາຊົນໃຫ້ຫລາຍຂຶ້ນຕື່ມ. ປະຊາຊົນຕ້ອງຮັກສາມູນເຊື້ອ, ມີຄວາມສາມັກຄີ, ເປັນເອກະພາບ ແລະ ປະຕິບັດຕາມແນວທາງຂອງລັດຖະບານ ກໍຄືຂອງແຂວງ ແລະ ຂອງເມືອງ. ນອກຈາກນີ້, ຄະນະທີມງານ ຍັງໄດ້ລົງພົບປະ ແລະ ລົງພື້ນທີ່ຕົວຈິງຂອບເຂດການຜະລິດຂອງປະຊາຊົນບ້ານຫາດແດນ ທີ່ຖືກຜົນກະທົບໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳອູ 3.

ຈາກນັ້ນ, ຄະນະ ໄດ້ກອງປະຊຸມປຶກສາຫາລືທິດທາງແກ້ໄຂຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳອູ 4 ຢູ່ທີ່ສະໂມສອນຂອງເມືອງຂວາ ແຂວງຜົ້ງສາລີ. ໃນທີ່ປະຊຸມ, ໄດ້ຮັບຟັງທ່ານ ພົມມີ ອິນມະສອນ ຮອງເລຂາພັກເມືອງຂວາ ແລະ ທ່ານ ສຸລິຍາ ແສງດາລາ ຫົວໜ້າໜ່ວຍງານ RMU ຂຶ້ນລາຍງານກ່ຽວກັບການທົດແທນຄ່າເສຍຫາຍ, ຍົກຍ້າຍຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່ໃຫ້ແກ່ປະຊາຊົນທີ່ຖືກຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳອູ 4. ພ້ອມນັ້ນ, ຜູ້ແທນກອງປະຊຸມໄດ້ປະກອບຄຳຄິດຄຳເຫັນ ເພື່ອຊອກຫາວິທີການແກ້ໄຂໃນບາງວຽກກ່ຽວກັບຟື້ນຟູຊີວິດການເປັນຢູ່ໃຫ້ແກ່ປະຊາຊົນທີ່ຖືກຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳອູ 4 ທີ່ຈະສືບຕໍ່ຈັດຕັ້ງປະຕິບັດ.

(ສູນທອງ ວິໄລຈິດ)



# ຖອດຖອນບົດຮຽນການຊ່ວຍເຫລືອສັງຄົມ



(ສພຊ) ວັນທີ 8 ພະຈິກ 2022 ທີ່ຫໍສະພາແຫ່ງຊາດ ໄດ້ຈັດກອງປະຊຸມຖອດຖອນບົດຮຽນການຊ່ວຍເຫລືອສັງຄົມ ກັບບັນດາຄອບຄົວຄະນະການນຳແຂວງຫລວງນ້ຳທາ ໂດຍການເປັນປະທານຂອງທ່ານ ນາງ ດຣ. ວິພາວັນ ພົມວິຫານ ປະທານກອງທຶນຊ່ວຍເຫລືອສັງຄົມຂອງສະພາແຫ່ງຊາດ; ມີບັນດາທ່ານຄະນະກອງທຶນ ແລະ ບັນດາຄອບຄົວຄະນະນຳແຂວງຫລວງນ້ຳທາ ນຳໂດຍທ່ານ ນາງ ຄຳຮວຍ ສີປະເສີດ ຄອບຄົວທ່ານເລຂາພັກແຂວງ-ເຈົ້າແຂວງໆຫລວງນ້ຳທາ ພ້ອມດ້ວຍຄະນະເຂົ້າຮ່ວມ.

ທັງນີ້, ກໍເພື່ອຖອດຖອນບົດຮຽນກ່ຽວກັບການລະດົມທຶນ ແລະ ການຊ່ວຍເຫລືອສັງຄົມ ທັງເພື່ອເປັນການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ເວົ້າລວມ, ເວົ້າສະເພາະ ແມ່ນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຂວງຫລວງນ້ຳທາ ໃນໄລຍະຜ່ານກໍຄືປະຈຸບັນ ເຫັນວ່າຄວາມຕ້ອງການໃນການພັດທະນາຍັງມີສູງ ແຕ່ດ້ານງົບປະມານມີຈຳກັດ; ພ້ອມນັ້ນ, ກໍຍັງມີເດັກກຳພ້າ, ຜູ້ທຸກຍາກອານະຖາ, ຜູ້ດ້ອຍໂອກາດທີ່ຢູ່ເຂດຫາງໄກຊອກຫລີກ ແລະ ການບັນເທົາທຸກ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບຈາກໄພທຳມະຊາດ ຍັງມີຄວາມຕ້ອງການການຊ່ວຍເຫລືອຢູ່; ສະນັ້ນ, ເພື່ອເຮັດໃຫ້ການຊ່ວຍເຫລືອສັງຄົມຢູ່ແຂວງຫລວງນ້ຳທາໄປຕາມທິດ ແລະ ມີປະສິດທິຜົນ; ກອງປະຊຸມ ໄດ້ແລກປ່ຽນ ແລະ ຖອດຖອນບົດຮຽນກ່ຽວກັບການລະດົມທຶນການຊ່ວຍເຫລືອສັງຄົມ ແລະ ອື່ນໆອີກຈຳນວນໜຶ່ງ.

(ນາງ ກຸກກິກ ບຸດດາໄຊ)

## ປະທານ...

ເງິນສາກົນ ແຫ່ງ ສ. ອາເມລິກາ (US International Development Finance Corporation ຫລື DFC) ພ້ອມດ້ວຍຄະນະຜູ້ແທນ ຈາກບໍລິສັດພະລັງງານທົດແທນ ຂອງ ສສ.ຫວຽດນາມ UPC ແລະ ສະຖານເອກອັກຄະລັດຖະທູດອາເມລິກາ.

ໃນການພົບປະຄັ້ງນີ້, ສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນຍາວນານ ບົນພື້ນຖານການເປັນຄູ່ຮ່ວມມືແບບກວມລວມ ລະຫວ່າງ ສປປລາວ ແລະ ສ. ອາເມລິກາ ເວົ້າລວມ, ເວົ້າສະເພາະ ລະຫວ່າງ ສອງອົງການນິຕິບັນຍັດ ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນ ເພື່ອຜົນປະໂຫຍດຂອງປະຊາຊົນສອງຊາດ, ເພື່ອພາລະກິດສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ໃນພາກພື້ນ ແລະ ໃນໂລກ, ພ້ອມທັງແລກປ່ຽນຄຳຄິດຄຳເຫັນນຳກັນກ່ຽວກັບສະພາບພົ້ນເດັ່ນ ຂອງ ສປປລາວ ກໍຄື ສະພາແຫ່ງຊາດ ແລະ ປຶກສາຫາລືກ່ຽວກັບແນວທາງການຮ່ວມມືສອງຝ່າຍໃນທ່າແຮງທີ່ບົ່ມຊ້ອນໃນການພັດທະນາຂອງ ສປປລາວ ເຊິ່ງອີງການດັ່ງກ່າວມີຄວາມສົນໃຈໃນການລົງທຶນເຂົ້າໃນໂຄງການການພັດທະນາພະລັງງານສະອາດ ເປັນຕົ້ນແມ່ນພະລັງງານລົມ, ພະລັງງານແສງອາທິດ ແລະພະລັງງານຄວາມຮ້ອນໃຕ້ພື້ນດິນ.

ໃນຕອນທ້າຍ, ທ່ານ ນາງ Maria E. Goravanchi ໄດ້ກ່າວສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນຂອງສະພາແຫ່ງຊາດລາວ ພ້ອມທັງຢືນຢັນຈະສືບຕໍ່ໃຫ້ການສະໜັບສະໜູນການຮ່ວມມືລະຫວ່າງ ສ. ອາເມລິກາ ແລະ ສປປລາວ ໃນຕໍ່ໜ້າ.



## ສ້າງຄວາມເຂັ້ມແຂງ...

(ສພຊ) ເພື່ອສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນພາຍໃນກົມສື່ມວນຊົນ ທາງດ້ານເຕັກນິກ ແລະ ເນື້ອໃນວຽກງານສື່ມວນຊົນ ເປັນຕົ້ນແມ່ນການຂີດຂຽນຂ່າວ, ບົດ ແລະ ການຕັດຕໍ່ວິດີໂອ; ເພື່ອຍົກລະດັບຄວາມຮູ້, ຄວາມສາມາດ, ປະສົບການ, ຄວາມເຂົ້າໃຈດ້ານວຽກງານສື່ມວນຊົນ ແລະ ເພື່ອຮັບປະກັນຄຸນນະພາບທາງດ້ານຂໍ້ມູນ-ຂ່າວສານຂອງສະພາແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ສາມາດຕອບສະໜອງໄດ້ໜ້າທີ່ວຽກງານຂອງສະພາແຫ່ງຊາດ; ເພື່ອເປັນການສຳມະນາບົດຮຽນດ້ານເຕັກນິກ, ແລກປ່ຽນທາງດ້ານວຽກງານການຂຽນຂ່າວ-ບົດ ແລະ ວິທີການແກ້ໄຂບັນຫາຕ່າງໆ ໃນການປະຕິບັດວຽກງານສື່ມວນຊົນຕົວຈິງໃນໄລຍະຜ່ານມາ.

ໃນລະຫວ່າງວັນທີ 5-6 ພະຈິກ 2022 ທີ່ເມືອງວັງວຽງ ແຂວງວຽງຈັນ ໄດ້ມີກອງປະຊຸມສຳມະນາສ້າງຄວາມເຂັ້ມແຂງໃຫ້ລັດຖະກອນພາຍໃນກົມສື່ມວນຊົນ ຄະນະເລຂາທິການສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ; ມີທ່ານ ສິງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ, ຜູ້ຊີ້ນຳວຽກງານສື່ມວນຊົນ; ຄະນະຊ່ຽວຊານທີ່ປຶກສາວຽກງານສື່ມວນຊົນຂອງສະພາແຫ່ງຊາດ, ຄະນະກົມ, ຄະນະພະແນກ, ວິທະຍາກອນ ແລະ ພະນັກງານ-ລັດຖະກອນ ພາຍໃນກົມສື່ມວນຊົນເຂົ້າຮ່ວມ.

ໃນກອງປະຊຸມ ບັນດາຜູ້ເຂົ້າຮ່ວມ ໄດ້ຮຽນຮູ້ກ່ຽວກັບເຕັກນິກການຕັດຕໍ່ວິດີໂອ; ຫລັກການຂຽນຂ່າວ-ບົດ, ການເປັນໂຄສົກຂ່າວ; ບົດຮຽນດ້ານເຕັກນິກ ແລະ ຕັດຕໍ່ສຽງລາຍການວິທະຍຸ; ຈາກນັ້ນ, ກອງປະຊຸມ ຍັງໄດ້ຈັດແບ່ງເປັນກຸ່ມ ເພື່ອຕັດຕໍ່ພາບ-ສຽງຕົວຈິງ ແລະ ແລກປ່ຽນສົນທະນາຖາມ-ຕອບຢ່າງສ້າງສັນ ແລະ ກົງໄປກົງມາ.

ໃນໂອກາດນີ້, ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ກ່າວວ່າ: ກອງປະຊຸມເຝິກອົບຮົມຂອງພວກເຮົາຄັ້ງນີ້ ແມ່ນມີຄວາມສຳຄັນຫລາຍ ເນື່ອງຈາກເປັນການພັດທະນາວຽກງານສື່ມວນຊົນໃຫ້ມີຄຸນນະພາບ ແລະ ທັນສະໄໝຍິ່ງຂຶ້ນ ສາມາດຕອບສະໜອງໄດ້ ວຽກງານຂອງສະພາແຫ່ງຊາດ; ພ້ອມນັ້ນ, ທ່ານຍັງເນັ້ນໜັກໃຫ້ຄະນະກົມ, ວິທະຍາກອນ ແລະ ພະນັກງານ-ລັດຖະກອນ ກົມສື່ມວນຊົນ ຕັ້ງໜ້າຮ່ຳຮຽນ, ແລກປ່ຽນບົດຮຽນນຳວິທະຍາກອນຜູ້ມີຄວາມຊ່ຽວຊານໃຫ້ມີຄວາມເຂົ້າໃຈ ແລະ ສາມາດນຳໄປປະຕິບັດໃນວຽກງານຕົວຈິງຂອງວຽກງານສື່ມວນຊົນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເພື່ອຍົກສູງພາລະບົດບາດຂອງກົມໃນຖານະເປັນເສນາທິການວຽກງານສື່ມວນຊົນຂອງຄະນະເລຂາທິການສະພາແຫ່ງຊາດ ກໍຄືສະພາແຫ່ງຊາດ ໃຫ້ມີຄຸນະພາບ ແລະ ສາມາດນຳໄປຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ.

(ນາງ ກຸກກິກ ບຸດດາໄຊ)





# 6 ເດືອນຕົ້ນປີ 2022 ແຂວງເຊກອງ ເກັບລາຍຮັບໄດ້ 42% ຂອງແຜນການປີ



ອີງຕາມການລາຍງານຂອງທ່ານ ເຫລັກໄຫລ ສີວິໄລ ເຈົ້າແຂວງເຊກອງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງເຊກອງ ຊຸດທີ II ໃນໂອກາດທີ່ເຂົ້າຮ່ວມກອງປະຊຸມໃນວາລະວັນທີ 16 ສິງຫາ ຜ່ານມາ ໄດ້ສະແດງໃຫ້ເຫັນວ່າ:

ໃນ 6 ເດືອນຜ່ານມາ ສາມາດຈັດເກັບລາຍຮັບເຂົ້າງົບປະມານໄດ້ 48,23 ຕື້ກີບເທົ່າກັບ 42% ຂອງແຜນການປີ ໃນນີ້ລາຍຮັບພູດສູນກາງປະຕິບັດຢູ່ທ້ອງຖິ່ນ 4.74 ຕື້ກີບເທົ່າກັບ 114% ແລະ ລາຍຮັບພູດຂອງແຂວງເກັບໄດ້ 43,49 ຕື້ກີບເທົ່າກັບ 40%, ສ່ວນລາຍຈ່າຍປະຕິບັດໄດ້ 152,37 ຕື້ກີບເທົ່າກັບ 43% ຂອງແຜນການປີ; ດ້ານກະສິກຳ ໄດ້ສຸມໃສ່ຜະລິດກະສິກຳເປັນສິນຄ້າ ລະ ຜະລິດເພື່ອຄ້ຳປະກັນສະບຽງອາຫານເປັນຕົ້ນ: ການປູກພືດທາດແປ້ງ, ປູກກາເຟ, ພືດຜັກ, ໂສມ, ການລ້ຽງສັດເປັນຟາມ ຊຶ່ງເຮັດໃຫ້ສາມາດຜະລິດຊີ້ນ, ປາ, ໄຂ່ ແລະ ໝູໃຫ້ສັງຄົມບໍລິໂພກ ເພື່ອຫລຸດຜ່ອນການນຳເຂົ້າໄດ້ຫຼາຍສົມຄວນ ໃນນີ້ສາມາດເກັບກູ້ (ຜະລິດເຂົ້ານາແຊງ) ໄດ້ 3.334 ໂຕນ, ມັນຕົ້ນ 208.000 ໂຕນ, ຢາງພາລາ 3.051 ໂຕນ, ກາເຟ 31.318 ໂຕນ, ພືດສະບຽງອາຫານ 5.818 ໂຕນ, ພືດເປັນສິນຄ້າ 11.200 ໂຕນ.

ສ່ວນວຽກງານຈຸດສຸມ 6 ເດືອນທ້າຍປີ 2022 ເຈົ້າແຂວງແຂວງເຊກອງ ລະບຸວ່າ: ສືບຕໍ່ຊຸກຍູ້ການຜະລິດ, ການລົງທຶນພາຍໃນ ແລະ ຕ່າງປະເທດຂອງຂະແໜງກະສິກຳ, ອຸດສາຫະກຳ ແລະ ການບໍລິການໃຫ້ແຂງແຮງກວ່າເກົ່າ; ສູ້ຊົນເກັບລາຍຮັບເຂົ້າງົບປະມານໃຫ້ໄດ້ຕາມແຜນ ຫລືລື່ນແຜນທີ່ກຳນົດໄວ້ ແລະ ສືບຕໍ່ປະຕິບັດມາດຕະການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໃຫ້ເປັນຮູບປະທຳ; ຄຸ້ມຄອງ, ຊຸກຍູ້ບັນດາໂຄງການລົງທຶນຂອງລັດ, ໂຄງການຊ່ວຍເຫລືອລ້າ-ກູ້ຢືມ ທີ່ກຳລັງຈັດຕັ້ງປະຕິບັດໃຫ້ປະຕິບັດຕາມລະບຽບການປະມູນ, ຕາມສັນຍາທີ່ກຳນົດໄວ້; ຊຸກຍູ້ວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດຮອບດ້ານ ຕາມທິດ 3 ສ້າງໃຫ້ສຳເລັດຕາມແຜນ ເພື່ອເປັນຕົວຊ່ວຍໜູນການຄົ້ນຄວ້າແກ້ໄຂບັນຫາຮີບດ່ວນ, ບັນດາວຽກຈຸດສຸມຂອງເມືອງ ແລະ ການແກ້ໄຂຄວາມທຸກຍາກຂອງປະຊາຊົນ; ປະຕິບັດຄາດໝາຍຕົວຊີ້ວັດໃນຂົງເຂດວັດທະນະທຳ-ສັງຄົມໃຫ້ສຳເລັດຕາມຄາດໝາຍ; ຍົກສູງປະສິດທິພາບການຄຸ້ມຄອງ, ບໍລິຫານລັດໃຫ້ມີຄວາມກະທັດຮັດ, ໂປ່ງໃສ ແລະ ຍຸຕິທຳ; ສືບຕໍ່ຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ໂດຍເລັ່ງຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດໃຫ້ສຳເລັດຕາມເປົ້າໝາຍແຜນການທີ່ວາງໄວ້.

ຮຽບຮຽງໂດຍ: ສົມຍາ

# ທາລືການປະເມີນການຈັດຕັ້ງປະຕິບັດ ນິຕິກຳໃຕ້ກົດໝາຍ 4 ສະບັບ



(ສພຊ) ໃນວັນທີ 1 ພະຈິກ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສາລະວັນ ໄດ້ເປີດກອງປະຊຸມປຶກສາຫາລືການປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍຈຳນວນ 4 ສະບັບ ພາຍໃຕ້ການເປັນປະທານຂອງທ່ານ ສຸກສະຫວັນ ຈັນທິສກ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທັງເປັນຄະນະຮັບຜິດຊອບຊີ້ນຳການປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ 4 ສະບັບ ພ້ອມດ້ວຍຄະນະກຳມະການ, ຄະນະເລຂາທິການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການອ້ອມຂ້າງແຂວງ, ຫົວໜ້າຂະແໜງ-ຮອງຂະແໜງ ແລະ ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຟັງແຜນການຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 230/ຄຈສຂ.ສວ, ລົງວັນທີ 20 ຕຸລາ 2022 ກ່ຽວກັບການຕິດຕາມກວດກາ ແລະ ເກັບກຳຂໍ້ມູນການປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ຈຳນວນ 4 ສະບັບ ຢູ່ອ້ອມຂ້າງແຂວງ; ຂໍ້ຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 229/ຄຈສຂ.ສວ, ລົງວັນທີ 20 ຕຸລາ 2022 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳ ແລະ ກອງເລຂາການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ຈຳນວນ 4 ສະບັບ; ຄຳແນະນຳຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 228/ຄຈສຂ.ສວ, ລົງວັນທີ 20 ຕຸລາ 2022 ວ່າດ້ວຍການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ 4 ສະບັບ; ນິຕິກຳໃຕ້ກົດໝາຍ ທີ່ຈະຕິດຕາມກວດກາ ແລະ ເກັບກຳຂໍ້ມູນໃນຄັ້ງນີ້ ປະກອບມີຂໍ້ຕົກລົງວ່າດ້ວຍການກຳນົດເຂດປະເມີນລາຄາທີ່ດິນ ຢູ່ແຂວງສາລະວັນ; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ຢູ່ແຂວງສາລະວັນ; ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຕະຫລາດວັນນັດ ຢູ່ແຂວງສາລະວັນ; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຂົນສົ່ງໂດຍສານ ແລະຂົນສົ່ງສິນຄ້າທາງບົກ ຢູ່ແຂວງສາລະວັນ.

ການປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ເປັນວຽກງານໜຶ່ງທີ່ສຳຄັນ ແລະ ຈຳເປັນ ໃນຂະບວນການສ້າງປັບປຸງນິຕິກຳໃຕ້ກົດໝາຍ ເຊິ່ງຕິດພັນກັບການຈັດຕັ້ງປະຕິບັດວຽກງານຂອງສະພາປະຊາຊົນແຂວງ, ອົງການປົກຄອງແຂວງ ໂດຍອົງການປົກຄອງແຂວງ ເປັນຕົ້ນແມ່ນບັນດາພະແນກການທີ່ກ່ຽວຂ້ອງ ເປັນເຈົ້າການດຳເນີນການປະເມີນຢ່າງກວ້າງຂວາງ ເລິກເຊິ່ງ, ສ່ວນຄະນະຮັບຜິດຊອບຊີ້ນຳຂອງສະພາປະຊາຊົນແຂວງ ຈະໄດ້ເຂົ້າຮ່ວມຕິດຕາມກວດກາ ແລະ ຊຸກຍູ້ການດຳເນີນການປະເມີນດັ່ງກ່າວ ຜົນສຳເລັດຂອງການປະເມີນໃນຄັ້ງນີ້ ຄະນະປະຈຳສະພາປະຊາຊົນແຂວງຈະຄົ້ນຄວ້າ ແລ້ວລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ພິຈາລະນາຮັບຮອງ.

(ນາງ ຄັດສອນ ຮຸ່ງສະຫວ່າງ)

# ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ມະຕິກອງປະຊຸມສະໄໝສາມັນ ທີ່ເມືອງຈຳພອນ



(ສພຊ) ໃນວັນທີ 4 ພະຈິກ 2022 ທ່ານ ກົງແກ້ວ ມີວໍລະຈັກ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍສະມາຊິກສະພາແຫ່ງຊາດ ຊຸດທີ IX ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ II ໄດ້ເຄື່ອນໄຫວຕິດຕາມກວດກາຊຸກຍູ້ການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 2 ແລະ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ ຢູ່ທີ່ເມືອງຈຳພອນ ໂດຍການຕ້ອນຮັບຂອງທ່ານ ປອ. ພູລຳພອນ ສີຫາວົງ ກຳມະການພັກແຂວງ ເລຂາພັກເມືອງ ເຈົ້າເມືອງໆຈຳພອນ, ມີຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການຕ່າງໆອ້ອມຂ້າງເມືອງເຂົ້າຮ່ວມ.

ທ່ານ ປອ. ພູລຳພອນ ສີຫາວົງ ໄດ້ລາຍງານສະພາບການພັດທະນາເສດຖະກິດ-ສັງຄົມຂອງເມືອງ ເຊິ່ງຈຳພອນມີ 100 ບ້ານ, ມີພົນລະເມືອງທັງໝົດ 119.248 ຄົນ ຍິງ 60.363 ຄົນ ມີ 20.351 ຫລັງຄາ, ມີ 21.542 ຄອບຄົວ, ເປັນເມືອງທີ່ງພຽງປະກອບດ້ວຍແຫລ່ງນ້ຳທຳມະຊາດ ແລະ ອ່າງເກັບນ້ຳຫລາຍແຫ່ງ ເຊິ່ງເປັນທ່າແຮງໃຫ້ແກ່ການຜະລິດກະສິກຳ ແລະ ທ່ອງທ່ຽວ ປະຊາຊົນສ່ວນຫລາຍແມ່ນໄດ້ຍຶດຖືອາຊີບເຮັດນາເປັນຕົ້ນຕໍ, ອາຊີບສຳຮອງແມ່ນການປູກຝັງລ້ຽງສັດ ໃນນັ້ນ, ການຜະລິດເຂົ້ານາປີ ໃນປີ 2022 ປະຕິບັດໄດ້ 22.100 ເຮັກຕາ ເທົ່າກັບ 100%, ສະມັດຕະພາບສະເລ່ຍ 3,31 ໂຕນ/ເຮັກຕາ, ເກັບກ່ຽວເຂົ້າໄດ້ 11.492 ເຮັກຕາ ເທົ່າກັບ 52%ໃນນັ້ນ, ຍັງມີຄອບຄົວຕົວແບບກຸ່ມການຜະລິດກຸ່ມປູກໝາກເຜັດບ້ານໄຜ່, ສາລີຫວານ, ໝາກໂມ, ເພື່ອຂາຍເປັນສິນຄ້າ; ດ້ານສາທາລະນະສຸກທົ່ວເມືອງຈຳພອນ ໄດ້ຮັບຮອງເປັນບ້ານຢຸດຕິການຖ່າຍຊະຊາຍ 51 ບ້ານ, ການສັກວັກຊີນປ້ອງກັນພະຍາດໂຄວິດ-19 ສາມາດປະຕິບັດໄດ້ ເຂັມ1 ໄດ້ 86.96%, ເຂັມ2 ໄດ້ 81%, ເຂັມ3 ໄດ້ 31%, ດ້ານວັດທະນະທຳ ປະຈຸບັນສາມາດສ້າງບ້ານວັດທະນະທຳໄດ້ 91 ບ້ານ.

ພາຍຫລັງທີ່ໄດ້ຮັບຟັງການລາຍງານໂດຍສັງເຂບຂອງທ່ານເຈົ້າເມືອງ, ປະທານກອງປະຊຸມກໍໄດ້ເປີດໂອກາດໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ທີ່ສັງກັດໃນແຕ່ລະຄະນະກຳມະການ ໄດ້ມີຄຳຖາມເຈາະຈີ້ມ ແລະ ແລກປ່ຽນຄຳຄິດຄຳເຫັນກັບບັນດາຫ້ອງການອ້ອມຂ້າງເມືອງ, ສຸດທ້າຍ ປະທານກໍໄດ້ສະຫລຸບ ພ້ອມທັງມີທິດຊີ້ນຳໃນການປະຕິບັດວຽກງານໃນຕໍ່ໜ້າ ທ່ານໄດ້ເນັ້ນໃຫ້ທຸກຂະແໜງການ ຈົ່ງສຸມໃສ່ເຮັດວຽກງານໃຫ້ບັນລຸເປົ້າໝາຍ,ຈຸດໃດທີ່ຍັງຄ້າງຄາ ແມ່ນໃຫ້ສະເໜີຂໍຄວາມຊ່ວຍເຫລືອຈາກສາຍຕັ້ງເພື່ອນຳມາພັດທະນາຂອບເຂດຂອງຕົນ ໃຫ້ດີຂຶ້ນກ່ວາເກົ່າ ແລະ ເນັ້ນໃຫ້ເຜີຍແຜ່ 2 ວາລະແຫ່ງຊາດ, ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ແລະ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II, ເພື່ອໃຫ້ປະຊາຊົນຮັບຮູ້ ແລະ ເຂົ້າໃຈຕື່ມອີກ.

(ນັກຂ່າວ ສພຂ ສະຫວັນນະເຂດ)




# ເຝິກອົບຮົມການນຳໃຊ້ເຄື່ອງມືໄອທີ ແລະ ການຂຽນຂ່າວ



(ສພຊ) ເພື່ອເປັນການຍົກສູງຄວາມຮູ້, ຄວາມສາມາດໃຫ້ພະນັກງານສະພາປະຊາຊົນດ້ານການນຳໃຊ້ວຽກງານໄອທີເຂົ້າໃນການປະຕິບັດໜ້າທີ່ວຽກງານ. ມາໃນວັນທີ 2 ພະຈິກ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ເປີດກອງປະຊຸມເຝິກອົບຮົມວຽກງານໄອທີ ແລະ ການຂຽນຂ່າວ ໂດຍການເປັນປະທານຂອງທ່ານ ນາງ ສາຍພູເງິນ ອຸດົມສຸກ ເລຂາທິການສະພາປະຊາຊົນແຂວງ, ມີຮອງປະທານຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານສະພາປະຊາຊົນແຂວງເຂົ້າຮ່ວມ.

ເນື້ອໃນເອກະສານທີ່ນຳມາເຝິກອົບຮົມໃນຄັ້ງນີ້ ມີການສະເໜີການນຳໃຊ້ເຄື່ອງມືສະມາດບອດ, ການແນະນຳກ່ຽວກັບການນຳໃຊ້ທູຄອນເຂົ້າໃນເຂົ້າຮ່ວມກອງປະຊຸມທາງໄກ, ແນະນຳການນຳໃຊ້ google Drive, ແນະນຳການນຳໃຊ້ເວັບໄຊຂອງສະພາແຫ່ງຊາດ ແລະ ແອັບ Laona, ແນະນຳການແກ້ໄຂ USB ທີ່ຕິດໄວລັດ ແລະ ການແນະນຳວິທີຂຽນຂ່າວ ເຊິ່ງກອງປະຊຸມໄດ້ດຳເນີນໃນຮູບແບບບັນລະຍາຍ, ແລກປ່ຽນສົນທະນາເຊິ່ງກັນແລະກັນ ໃນກອງປະຊຸມໄດ້ດຳເນີນໄປດ້ວຍບັນຍາກາດຟົດຟື້ນ.

ໃນທີ່ປະຊຸມ, ທ່ານ ນາງ ສາຍພູເງິນ ອຸດົມສຸກ ຍັງໃຫ້ຄຳເຫັນໃຫ້ພະນັກງານສະພາປະຊາຊົນແຂວງ ຈົ່ງສຸມສະຕິປັນຍາ, ຄົ້ນຄວ້າ ແລ້ວສາມາດນຳໄປຈັດຕັ້ງປະຕິບັດວຽກງານຕົວຈິງໃຫ້ໄດ້ດີຂຶ້ນກວ່າເກົ່າ.

(ນາງ ສຸກສະຫ້ອນ ອິນທະແສງ)

# ຄະນະປະຈຳ ສພຂ ອັດຕະປື ສະເໜີອົງການປົກຄອງແຂວງເອົາໃຈໃສ່ 19 ບັນຫາ

ຮຽບຮຽງໂດຍ: ວິມັດ

ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ (ສພຂ) ອັດຕະປື ຊຸດທີ II ໃນວາລະວັນທີ 15 ສິງຫາຜ່ານມາ, ທ່ານ ນາງ ພອນມະນີ ຊຽນໄຊຍະວົງ ຮອງປະທານ ສພຂ ຕາງໜ້າໃຫ້ຄະນະປະຈຳ ສພຂ ໄດ້ປະກອບຄຳເຫັນຕໍ່ບົດລາຍງານອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂັ້ນແຂວງ 6 ເດືອນຕົ້ນປີ 2022 ແລະ ທິດທາງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂັ້ນແຂວງ 6 ເດືອນທ້າຍປີ 2022 ເຊິ່ງຄະນະປະຈຳ ສພຂ ໄດ້ສະເໜີໃຫ້ອົງການປົກຄອງແຂວງ ເອົາໃຈໃສ່ປະຕິບັດ 19 ບັນຫາສຳຄັນເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂັ້ນແຂວງ ບັນລຸຕາມແຜນທີ່ກຳນົດໄວ້ ດັ່ງນີ້:

1) ສືບຕໍ່ຕິດຕາມ, ຄົ້ນຄວ້າຕີລາຄາ ແລະ ຄາດຄະເນສະພາບການຜັນແປຂອງເສດຖະກິດຂອງພາກພື້ນ ແລະ ພາຍໃນປະເທດໃຫ້ຈະແຈ້ງ ໃຫ້ທັນການເພື່ອກຳເອົາກາລະໂອກາດ, ສິ່ງທ້າທາຍ ແລະ ມີມາດຕະການຮັບມືຢ່າງເປັນເຈົ້າການ ແລະ ໃຫ້ທວງທັນກັບສະພາບການ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ໄດ້ຄາດໝາຍຕາມມະຕິສະພາປະຊາຊົນຂັ້ນແຂວງຮັບຮອງ.

2) ຄົ້ນຄວ້ານະໂຍບາຍ ແລະ ມາດຕາການຈະແຈ້ງກ່ຽວກັບການດຸນດ່ຽງເສດຖະກິດມະຫາພາກ ເປັນຕົ້ນແມ່ນຮັບປະກັນການດຸນດ່ຽງກະແສເງິນຕາເຂົ້າ-ອອກຕ່າງປະເທດ, ການຊຳລະກັບຕ່າງປະເທດ ໂດຍສະເພາະເອົາໃຈໃສ່ຄຸ້ມຄອງລາຍຈ່າຍເປັນເງິນຕາຈາກການສົ່ງອອກ ແລະ ການນຳເຂົ້າໃຫ້ຄົບຖ້ວນ ແລະ ເຂົ້າສູ່ລະບົບ; ຮັບປະກັນການດຸນດ່ຽງ ແຫລ່ງທຶນການພັດທະນາ; ຮັບປະກັນການດຸນດ່ຽງງົບປະມານແຫ່ງລັດ ໂດຍສະເພາະພິຈາລະນາໂຄງການລົງທຶນໃໝ່ ເພື່ອບໍ່ໃຫ້ສ້າງຄວາມກົດດັນ ຕໍ່ສະພາບໜີ້ສິນສາທາລະນະ; ຮັບປະກັນການດຸນດ່ຽງການສະໜອງ ແລະ ຄວາມຕ້ອງການສິນຄ້າພາຍໃນແຂວງ; ຮັບປະກັນການດຸນດ່ຽງແຮງງານ ເປັນຕົ້ນການສ້າງວຽກເຮັດງານທຳ ແລະ ຕອບສະໜອງແຮງງານ ໃຫ້ພຽງພໍຕາມຄວາມຕ້ອງການຂອງການພັດທະນາແຂວງ.

3) ເອົາໃຈໃສ່ຄົ້ນຄວ້າ ແລະ ກຳນົດມາດຕະການປະຕິບັດແຜນງົບປະມານ ໃຫ້ຕິດພັນກັບແຜນວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ໂດຍສະເພາະການປະຕິບັດຄາດໝາຍແກ້ໄຂໜີ້ສິນສາທາລະນະ ໃຫ້ມີຄວາມຄືບໜ້າ ເພື່ອສາມາດບັນລຸຄາດໝາຍ ຕາມທີ່ໄດ້ກຳນົດໃນມະຕິສະພາປະຊາຊົນແຂວງ ຮອດປີ 2023; ເລັ່ງລັດການຫັນເປັນທັນສະໄໝ ດ້ວຍລະບົບດີຈີຕອນໃນຂົງເຂດການເງິນ-ງົບປະມານ, ຮັບປະກັນການຈັດຕັ້ງເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍງົບປະມານ ໃຫ້ເປັນລະບົບ, ປະຕິບັດວິໄນແຜນການ-ການເງິນຢ່າງເຂັ້ມງວດຕາມກົດໝາຍ ໃຫ້ມີຜົນສັກສິດ ມີປະສິດທິພາບ ແລະ ປະສິດທິຜົນ.



4) ເພີ່ມທະວີການໂຄສະນາສຶກສາອົບຮົມຢ່າງກວ້າງຂວາງ, ສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ທີ່ເປັນເອກະພາບທົ່ວປວງຊົນ, ປູກຈິດສຳນຶກນ້ຳໃຈຮັກຊາດ ແລະ ພັດທະນາ, ເພິ່ງຕົນເອງ-ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຫັນວິກິດໃຫ້ເປັນໂອກາດ ໃນເງື່ອນໄຂທີ່ເສດຖະກິດມີຄວາມຫຍຸ້ງຍາກ ດ້ວຍການຂຸດຄົ້ນ ແລະ ນຳໃຊ້ທ່າແຮງບົ່ມຊ້ອນຂອງທຸກພາກສ່ວນ, ເພື່ອສົ່ງເສີມການຜະລິດ ແລະ ຊົມໃຊ້ຜະລິດຕະພັນພາຍໃນໃຫ້ປະກົດຜົນເປັນຈິງ ລວມທັງການນຳໃຊ້ເງິນກີບ ໃນທົ່ວສັງຄົມ.

5) ເອົາໃຈໃສ່ຊີ້ນຳຂະແໜງການຂັ້ນແຂວງ ແລະ ອົງການປົກຄອງເມືອງ ສືບຕໍ່ຈັດຕັ້ງປະຕິບັດບັນດາຄາດໝາຍ, ນະໂຍບາຍ ແລະ ມາດຕະການຕ່າງໆ ທີ່ໄດ້ຮັບຮອງໃນມະຕິ 16/ສພຂ ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ ຊຸດທີ II ເພື່ອຮັບປະກັນໃຫ້ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃຫ້ໄດ້ຕາມແຜນການທີ່ກຳນົດໄວ້.

6) ເອົາໃຈໃສ່ປະຕິບັດມາດຕະການ ທີ່ໄດ້ກຳນົດ ເພື່ອບັນລຸຄາດໝາຍດ້ານເງິນຕາ ທີ່ເປັນບັນຫາຫລໍ່ແຫລມ ເປັນຕົ້ນອັດຕາເງິນເຟີ້, ອັດຕາແລກປ່ຽນ, ເພື່ອຮັບປະກັນສະຖຽນລະພາບດ້ານເສດຖະກິດມະຫາພາກ, ສາມາດປະຄັບປະຄອງເສດຖະກິດບໍ່ໃຫ້ເຂົ້າສູ່ວິກິດການທີ່ຮ້າຍແຮງ ແລະ ຫລຸດຜ່ອນຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ; ຄົ້ນຄວ້າວິທີການ ແລະ ມາດຕະການໃນການຫັນວິກິດ ໃຫ້ເປັນກາລະໂອກາດ ໂດຍສຸມໃສ່ປັບປຸງໂຄງສ້າງທະນາຄານ, ການຈັດຕັ້ງ ແລະ ບຸກຄະລາກອນ, ກົນໄກການເຮັດວຽກ ໃນຂົງເຂດທະນາຄານ ໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

7) ເອົາໃຈໃສ່ກຳນົດມາດຕະການ ແລະ ເວລາໃນການຈັດຕັ້ງປະຕິບັດບັນດາໜ້າວຽກທີ່ມີລັກສະນະເຄັ່ງຮ້ອນ ໃຫ້ເປັນວຽກບູລິມະສິດ ແລະ ຈຸດສຸມໃຫ້ເປັນຮູບປະທຳໂດຍໄວ ເປັນຕົ້ນແມ່ນການສະໜອງເງິນຕາຕ່າງປະເທດ ໃຫ້ແກ່ການນຳເຂົ້າ ແລະ ສະໜອງນ້ຳມັນເຊື້ອໄຟ ໃຫ້ພຽງພໍກັບຄວາມຕ້ອງການ ໃນການຮັບໃຊ້ການຜະລິດ, ການຊົມໃຊ້ໃນສັງຄົມ, ຄຸ້ມຄອງລາສິນຄ້າອຸປະໂພກ ແລະ ບໍລິໂພກ ບໍ່ໃຫ້ເໜັງຕີງແຮງ.

8) ໃຫ້ຂະແໜງການອຸດສະຫະກຳ ແລະ ການຄ້າສືບຕໍ່ປະສານສົມທົບ ໃນການຕິດຕາມກວດກາ, ຄຸ້ມຄອງລາຄາສິນຄ້າອຸປະໂພກບໍລິໂພກ ທີ່ມີຄວາມອ່ອນໄຫວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ມີລາຄາສົມເຫດສົມຜົນ ແລະ ຕອບສະໜອງກັບຄວາມຕ້ອງການຂອງປະຊາຊົນ.

9) ອຳນວຍຄວາມສະດວກ ໃນການສະໜອງທຶນສິນເຊື່ອ, ແນວພັນ, ຝຸ່ນ ແລະ ອື່ນໆ ເພື່ອຮັບປະກັນໃຫ້ແກ່ການຜະລິດກະສິກຳທັນລະດູການ ພ້ອມທັງກວດກາຄືນ ລະບົບຊົນລະປະທານໃຫ້ຮັບປະກັນໄດ້ ການຕ້ານແລ້ງຕ້ານຖ້ວມ ຢ່າງມີປະສິດທິພາບ, ປະສິດທິຜົນ ເພື່ອຕອບສະໜອງສະບຽງອາຫານພາຍໃນແຂວງໃຫ້ພຽງພໍ.

10) ເອົາໃຈໃສ່ຊຸກຍູ້, ສົ່ງເສີມເຕັກນິກວິຊາການໃນການປູກ, ການລ້ຽງ ທັງລະດູແລ້ງ ແລະ ລະດູຝົນ ເພີ່ມສະມັດຕະພາບການຜະລິດຂອງປະຊາຊົນໃຫ້ຫລາຍຂຶ້ນ, ຊອກແຫລ່ງທຶນ ແລະ ຕະຫລາດຈຳໜ່າຍ ເພື່ອຫລຸດຕົ້ນທຶນການຜະລິດ ໃຫ້ແກ່ຊາວກະສິກອນສາມາດເພິ່ງຕົນເອງກຸ້ມຕົນເອງ ຫລືຜະລິດໃຫ້ໄດ້ຫລາຍກາຍເປັນສິນຄ້າ, ສົ່ງເສີມການຜະລິດກະສິກຳສະອາດ ຫັນມາບໍລິໂພກກະສິກຳພາຍໃນ ໃຫ້ຫຼາຍຂຶ້ນ ເຮັດໃຫ້ປະຊາຊົນມີລາຍໄດ້ເພີ່ມຂຶ້ນ.

11) ສືບຕໍ່ເອົາໃຈໃສ່ຈັດສັນເນື້ອທີ່ ທຳການຜະລິດໃຫ້ປະຊາຊົນເຂດໄພພິບັດເມືອງສະໜາມໄຊໃຫ້ສຳເລັດໂດຍໄວ, ຫລີກລ່ຽງຂໍ້ຂັດແຍ່ງລະຫວ່າງປະຊາຊົນດ້ວຍກັນ.

12) ເອົາໃຈໃສ່ຄົ້ນຄວ້າ ແລະ ກຳນົດມາດຕະການ ດ້ານການປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດູນ, ປັບປຸງ ແລະ ຂະຫຍາຍຕາງໜ່າງ ສະຖານີອຸຕຸນິຍົມ, ອຸທົກກະສາດ ແລະ ລະບົບເຕືອນໄພຕໍ່ໜ້າ ພ້ອມທັງວາງມາດຕະການຮັບມື, ແກ້ໄຂເພື່ອຫລຸດຜ່ອນຜົນກະທົບຈາກໄພພິບັດທຳມະຊາດ (ນ້ຳຖ້ວມ ແລະ ໄພແລ້ງ) ທີ່ເກີດຂຶ້ນໃນລະດູຝົນ;

13) ສືບຕໍ່ຄົ້ນຄວ້າ, ກຳນົດນະໂຍບາຍ ແລະ ມາດຕະການປັບປຸງແຜນການຮຽນ-ການສອນ ໂດຍສຸມໃສ່ແກ້ໄຂບັນດາຄາດໝາຍທີ່ບໍ່ທັນບັນລຸໃຫ້ມີຄວາມຄືບໜ້າ ແລະ ສາມາດບັນລຸຕາມແຜນການ ແລະ ຮັກສາບັນດາຄາດໝາຍ ທີ່ບັນລຸແລ້ວໃຫ້ມີຄວາມຍືນຍົງ.

14) ສືບຕໍ່ຄົ້ນຄວ້າ ແລະ ກຳນົດມາດຕະການຕ້ານ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19, ພະຍາດຕາມລະດູການ ແລະ ສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍດ້ານສາທາລະນະສຸກ ທີ່ບໍ່ບັນລຸໃຫ້ບັນລຸຕາມແຜນການ.

15) ສືບຕໍ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ເພື່ອຄຸ້ມຄອງແຮງງານໃຫ້ເຂົ້າສູ່ລະບົບໃນການພັດທະນາສີມືແຮງງານ-ຊອກວຽກເຮັດງານທຳ ແນໃສ່ແກ້ໄຂບັນຫາການຫວ່າງງານ, ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດປະຊາທິປະໄຕໃຫ້ມີຄວາມຍືນຍົງ.

16) ເອົາໃຈໃສ່ປັບປຸງພື້ນຖານໂຄງລ່າງ, ສະຖານທີ່ທ່ອງທ່ຽວ ແລະ ການບໍລິການໃຫ້ໄດ້ມາດຕະຖານ ເພື່ອຮັບປະກັນການເປີດການທ່ອງທ່ຽວສີຂຽວ. ພ້ອມທັງຮັບປະກັນຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ ແລະ ສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍທີ່ບໍ່ທັນສຳເລັດໃຫ້ບັນລຸຕາມແຜນການທີ່ວາງໄວ້.

17) ເອົາໃຈໃສ່ປະເມີນຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃນເຂດຈຸດສຸມ ແລະ ເມືອງເປົ້າໝາຍ ຕິດພັນກັບວຽກງານ 3 ສ້າງໃນການແບ່ງຂັ້ນຄຸ້ມຄອງລະຫວ່າງແຂວງ, ເມືອງ ແລະ ບ້ານໃຫ້ຈະແຈ້ງ.

18) ເອົາໃຈໃສ່ຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ໃຫ້ເຂັ້ມແຂງກວ່າເກົ່າ ດ້ວຍການເພີ່ມທະວີໂຄສະນາເຜີຍແຜ່ກົດໝາຍໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃຫ້ກວ້າງຂວາງ ແລະ ທົ່ວເຖິງ.

19) ສືບຕໍ່ເອົາໃຈໃສ່ຄຸ້ມຄອງລັດ-ສັງຄົມດ້ວຍກົດໝາຍ ຄຽງຄູ່ກັບການໂຄສະນາເຜີຍແຜ່ກົດໝາຍໃຫ້ກວ້າງຂວາງ ຊີ້ນຳບັນດາພະແນກການໃນການອອກນິຕິກຳໃຕ້ກົດໝາຍ ໃຫ້ສອດຄ່ອງກັບກົດໝາຍ ຕິດພັນກັບການແກ້ໄຂປາກົດການຫຍໍ້ທໍ້ໃນສັງຄົມໃຫ້ໄປຕາມຫລັກການ, ເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບ.

## ສສຊ ປະຈຳເມືອງອາດສະພອນ ແລະ ເມືອງພະລານໄຊ ສະເໜີໃຫ້ກວດກາຄືນບັນຫາສິນຄ້າປັບລາຄາຂຶ້ນສູງ

ຮຽບຮຽງໂດຍ: ອັກສອນສິນ ພົມມະຈັນ



ໃນວາລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ II ໃນວັນທີ 27 ກໍລະກົດ 2022 ທ່ານ ນາງ ທົງຄຳ ໄຊຍະຄົມ ສະມາຊິກສະພາແຫ່ງຊາດ ທັງເປັນສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງອາດສະພອນ ແຂວງສະຫວັນນະເຂດ ໄດ້ປະກອບຄຳເຫັນຕໍ່ວຽກງານອົງການປົກຄອງແຂວງ ໂດຍສະເພາະຕໍ່ວຽກງານພັດທະນາເສດຖະກິດ-ສັງຄົມຂອງແຂວງໃນໄລຍະ 6 ເດືອນຕົ້ນປີຜ່ານມາ ເຫັນວ່າມີຫລາຍຢ່າງໄດ້ຮັບການແກ້ໄຂໄດ້ດີ ແຕ່ບາງຢ່າງກໍໄດ້ສົ່ງຜົນກະທົບໜັກຕໍ່ປະຊາຊົນ ໂດຍສະເພາະແມ່ນບັນຫາລາຄາສິນຄ້າຕາມທ້ອງຕະຫລາດ, ຕາມຫ້າງຮ້ານເກືອບທຸກປະເພດສິນຄ້າ ທີ່ເຫັນວ່າໄດ້ດີດໂຕຂຶ້ນສູງແບບກ້າວກະໂດດ ສິນຄ້າບາງປະເພດແມ່ນຂຶ້ນລາຄາ 2 ເທົ່າເມື່ອທຽບໃສ່ກັບເມື່ອກ່ອນ ແລະ ຂຶ້ນແລ້ວກໍຂຶ້ນເລີຍບໍ່ຍອມປັບລົງ ສະນັ້ນ, ຈຶ່ງສະເໜີໃຫ້ພາກສ່ວນກ່ຽວຂ້ອງກວດກາຄືນດ່ວນວ່າເປັນຍ້ອນຕົ້ນທຶນ ຫລື ເປັນນຳພໍ່ຄ້າ-ແມ່ຄ້າສວຍໂອກາດຂຶ້ນລາຄາ.

ສ່ວນທ່ານ ປອ. ສຸກສະຫວັນ ໄຊສົມບັດ ສະມາຊິກສະພາແຫ່ງຊາດ ທັງເປັນສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງພະລານໄຊ ແຂວງສະຫວັນນະເຂດ ກໍໄດ້ມີຄຳສະເໜີຕໍ່ພະແນກອຸດສາຫະກຳ ແລະ ການຄ້າແຂວງສະຫວັນນະເຂດ ຄວນມີການກຳນົດລະອຽດກ່ຽວກັບລາຄາສິນຄ້າທີ່ຈຳເປັນຕໍ່ການດຳລົງຊີວິດຂອງປະຊາຊົນ ເຊິ່ງປະຊາຊົນຕ້ອງໃຊ້ເຄື່ອງແພງແຕ່ຄ່າແຮງງານພັດຕ່ຳ ເຊິ່ງໄດ້ສົ່ງຜົນກະທົບໜັກຕໍ່ປະຊາຊົນໃນປັດຈຸບັນ.

## ທາຫລືກະກຽມຄວາມພ້ອມຕ້ອນຮັບຄະນະມິດຕະພາບ ລັດຖະສະພາລາວ-ມົງໂກລີ

(ສພຊ) ໃນຕອນເຊົ້າຂອງວັນທີ 31 ຕຸລາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສາລະວັນ ໄດ້ຈັດກອງປະຊຸມປຶກສາຫາລືຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ໂດຍການເປັນປະທານກອງປະຊຸມຂອງທ່ານ ສີເຮັງ ຫອມສົມບັດ ຮອງເລຂາພັກແຂວງ ປະທານຄະນະສະມາຊິກສະພາແຫ່ງຊາດ ເຂດ 14 ປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມມີ ທ່ານ ຂັນໄຊ ລັດຖະເຮົ້າ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ມີຄະນະເລຂາທິການ ສພຂ, ຕາງໜ້າຈາກກົມກອງ, ຫ້ອງວ່າການແຂວງ ແລະ ພະແນກການທີ່ກ່ຽວຂ້ອງ ພ້ອມດ້ວຍພະນັກງານພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມ.



ໃນກອງປະຊຸມໄດ້ຮັບຟັງການລາຍງານການກະກຽມຄວາມພ້ອມຕ້ອນຮັບຕາມແຜນການເຄື່ອນໄຫວລວມຂອງຄະນະມິດຕະພາບລັດຖະສະພາລາວ-ມົງໂກລີ ທີ່ຈະມາເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງສາລະວັນ ໃນລະຫວ່າງວັນທີ 2-5 ພະຈິກ 2022, ເຊິ່ງທ່ານ ສີເຮັງ ຫອມສົມບັດ ຮອງເລຂາພັກແຂວງ, ປະທານກອງປະຊຸມ ໄດ້ມອບໝາຍໃຫ້ທຸກພາກສ່ວນຈົ່ງພ້ອມກັນເປັນເຈົ້າການສືບຕໍ່ຈັດຕັ້ງປະຕິບັດຕາມຂອບເຂດຄວາມຮັບຜິດຊອບ ໂດຍຖືສຳຄັນການພົວພັນປະສານງານຮ່ວມກັນຢ່າງຕໍ່ເນື່ອງ ເພື່ອສ້າງສິ່ງອຳນວຍຄວາມສະດວກໃນດ້ານພິທີການ ແລະ ສະຖານທີ່ການກະກຽມດ້ານເນື້ອໃນ, ລະດົມທຸກພາກສ່ວນອອກແຮງງານອະນາໄມລວມໃຫ້ມີຄວາມສະອາດເປັນລະບຽບຮຽບຮ້ອຍໃນເທສະບານເມືອງ, ຮັບປະກັນການຮັກສາຄວາມສະຫງົບປອດໄພຕະຫລອດ 24 ຊົ່ວໂມງຕາມຈຸດຕ່າງໆຂອງແຂວງສາລະວັນ.

(ນາງ ຄັດສອນ ຮຸ່ງສະຫວ່າງ)



## ສຸກສະບາຍຫາຍໂຣຄາ

# ສັນຍານເຕືອນກ່ຽວກັບມະເຮັງເຕົ້ານົມ

**ແປ ແລະ ຮຽບຮຽງໂດຍ: ສາວແວ່ນ**



ມະເຮັງເຕົ້ານົມ ແມ່ນເປັນມະເຮັງທີ່ເກີດຈາກຄວາມຜິດປົກກະຕິຂອງຈຸລັງໃນເຕົ້ານົມ ໂດຍສະເພາະແມ່ນຈຸລັງທໍ່ນົມຈະເລີ່ມແບ່ງອອກຢ່າງຜິດປົກກະຕິ ແລ້ວແຜ່ໄປສູ່ເນື້ອເຍື່ອໃກ້ຄຽງ ຖ້າປະໄວ້ດົນອາດຈະແຜ່ໄປສູ່ຈຸລັງອື່ນໆໃນຮ່າງກາຍ ຜ່ານທາງທໍ່ນ້ຳເຫລືອງ.

ສັນຍານເຕືອນວ່າ ອາດເປັນມະເຮັງເຕົ້ານົມ ສາມາດສັງເກດໄດ້ດ້ວຍຕົນເອງ:

- ຄຳ (ງົມ) ກວດພໍ້ກ້ອນໃນເຕົ້ານົມ ຫລື ບໍລິເວນຂີ້ແຮ້ ຖ້າໄລຍະທຳອິດຂອງມະເຮັງ ຈັບ ຫລື ແຕະຈະບໍ່ຮູ້ສຶກເຈັບຈຶ່ງບໍ່ໄດ້ສົນໃຈຫຍັງ ແຕ່ບໍ່ຄວນປ່ອຍລະເລີຍ ຢ່າຄິດວ່າບໍ່ຮູ້ສຶກເຈັບ ແລ້ວຈະບໍ່ແມ່ນມະເຮັງ
- ເກີດຄວາມປ່ຽນແປງຜິດປົກກະຕິຂຶ້ນ ຢູ່ໃນເຕົ້ານົມຂ້າງໃດຂ້າງໜຶ່ງ
- ເຕົ້ານົມໃຫຍ່ຂຶ້ນຢ່າງໄວວາເລີ່ມຕົ້ນຈາກຂ້າງໃດຂ້າງໜຶ່ງ
- ຮູບຮ່າງຂອງເຕົ້ານົມມີການປ່ຽນແປງ ບໍ່ຄືກັນ ໂດຍບໍ່ມີການຜ່າຕັດມາກ່ອນ
- ມີການປ່ຽນແປງຂອງຜິວໜັງເຕົ້ານົມ ເຊັ່ນ: ຜິວໜັງແຂງ ຫລື ໜາ ມີກ້ອນນູນຂຶ້ນ, ສີຜິວທີ່ປ່ຽນໄປ, ມີບາດແຜຊຳເຮື້ອ ຫລື ຮອຍຮູຂຸມຂົນແຈ້ງຂຶ້ນ ຄືກັບເປືອກໝາກກ້ຽງ;
- ມີອາການເຈັບເຕົ້ານົມຂ້າງໃດຂ້າງໜຶ່ງ ອາດຈະເປັນພຽງເລັກນ້ອຍ;
- ມີອາການບວມແດງໃນເຕົ້ານົມ ອາດມີອາການເຈັບ ຫລື ບາດແຜຢູ່ບໍລິເວນທີ່ເປັນບວມແດງນຳອີກ.
- ບໍລິເວນເຕົ້ານົມມີຮອຍຍຸບ ຫລື ຮອຍຫ່ຽວ.
- ມີການເນົ່າຢູ່ຫົວນົມ ຫລື ສ່ວນອື່ນໆຂອງບໍລິເວນເຕົ້ານົມ.
- ຫົວນົມຍຸບເຂົ້າໄປໃນເຕົ້ານົມ ຫລື ບໍ່ສະໝ່ຳສະເໝີ ໂດຍບໍ່ໄດ້ເປັນມາແຕ່ເກີດ ຫລື ການຜ່າຕັດໃດໆ
- ມີເລືອດ ຫລື ນ້ຳໄຫລອອກ ເຊັ່ນ: ມີນ້ຳເຫລືອງໃສໆ ໄຫລອອກຈາກຫົວນົມ ຫລື ແມ່ຍິງທີ່ບໍ່ມີລູກແຕ່ມີນ້ຳນົມໄຫລອອກມາ ຖືວ່າຜິດປົກກະຕິ ແລະ ເປັນສັນຍານອັນຕະລາຍເຊັ່ນດຽວກັນ.
- ມີບາດແຜຢູ່ຫົວນົມ ເປັນບາດແຜສີແດງ ແລະ ມັກຈະປິ່ນປົວບໍ່ດີ.

ຖ້າທ່ານຫາກມີອາການດັ່ງກ່າວ ຄວນໄປພົບໝໍເພື່ອກວດລະອຽດຕື່ມ ແຕ່ຢ່າຕົກໃຈ ເນື່ອງຈາກອາການບາງຢ່າງ ມັນຍັງບໍ່ທັນເປັນຕົວຊີ້ບອກວ່າເປັນມະເຮັງເຕົ້ານົມ ແຕ່ມັນເປັນອາການທີ່ພົບເລື້ອຍ ແລະ ມັກຈະກ່ຽວຂ້ອງກັບມະເຮັງ.

www.praram9.com

## ສາລາກະວີ

# ເພື່ອນກັນ

**# ໂດຍ: ໂອທອງ ຄຳອິນຊູ**

❊ ຍາມມີກິນພຽບພ້ອມ
ຂານອາສາດີດອມ
ຍົກຈອກໃດຄຳເວົ້າ
ຂໍໃຫ້ລວຍລາບລື້ນ

ຊອມຮ່ວມຮຽງພາ
ຮໍ່ຫອມໂຮມໃກ້
ອວຍພອນຫວານຊື່ນ
ໄປໜ້າຢ່າຖອຍ

❊ ຊີວິດ ໃສຊື່ນຊ້ອຍ
ສຸກທັງກາຍໃຈນຳ
ນ້ຳເບຍຫອມປານອິ້ມ
ຄັນເອົາຂຽນໃສ່ເຈ້ຍ

ໄກຫ່າງໂພຍໄພ
ພໍ່າແຂງແຮງພ້ອມ
ຄືມຄຳໄຫລລ່ຽນ
ຊາວໜ້າບໍ່ພໍ

❊ ນີ້ແຫລະນໍເພິ່ນເວົ້າ
ເພື່ອນເມື່ອຕອນລົມເບຍ
ຮອຍຍິ້ມແຊມໃບໜ້າ
ຂະບວນການແບບນີ້

ເປັນເພື່ອນຍາມກິນ
ຄີບເອົາຂອງແກ້ມ
ສຽງຫົວຝັງມ່ວນ
ມີເລື້ອຍທີ່ເຫັນ

❊ ແຕ່ຈະເປັນເພື່ອນແທ້
ຕອນທີ່ ຖົງເງິນພັງ
ຕອນທີ່ ໃນພາເຂົ້າ
ຄັນໃຜຍັງນັ່ງເຝົ້າ

ແລເບິ່ງຄາວຫລັງ
ຂາດເຂີນຂອງໃຊ້
ມີພຽງຈານເປົ່າ
ຈາເວົ້າຫ່ວງໃຍ

❊ ຄືນນີ້ ຄວນຄ່າໄດ້
ຕ້ອງສະຫລອງທັນທີ
ຍົກມາແມຂອງແກ້ມ
ນ້ຳດື່ມ ມີໜຶ່ງແກ້ວ

ໃຈເພື່ອນໄປຄອງ
ຢ່າລີລໍຊ້າ
ເປັນປາຊິວຈີ່
ມາເຫຍັ້ນແບ່ງກັນ ເພື່ອນເອີຍ!

# ເບີໂທສຸກເສີນ

**❑ ຕຳຫລວດ**

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927
- ກົມຕຳຫລວດສະກັດກັ້ນແລະຕ້ານການຄ້າມະນຸດ 021 970543
- ກົມຕຳຫລວດກວດຄົນເຂົ້າເມືອງ (ຕມ) 021 251287
- ກົມຄຸ້ມຄອງຄົນຕ່າງປະເທດ 021 212520
- ສາຍດ່ວນ 1191

**❑ ໜ່ວຍກູ້ໄພ**

- ສະມາຄົມອາສາກູ້ໄພນະຄອນຫລວງ 1624
- ໜ່ວຍກູ້ໄພມູນນິທິຊ່ວຍເຫລືອຄົນທຸກຍາກ 1623
- ໜ່ວຍຊ່ວຍເຫລືອຜູ້ປະສົບໄພ ອົງການກາແດງ 1625
- ມູນນິທິ ກູ້ໄພ ນາຄາ 1513



## ທັກທາຍ ລະບາຍ

**# ສາວຈົ້ມ**

***(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)***

❊ ***ບຸນ***ທາດຫລວງປະຈຳປີ 2022 ຜ່ານພົ້ນໄປ ຫລາຍຄົນຊົມຍົກຍ້ອງ ບັນຍາກາດງານບຸນ ມີທັງຄວາມສະຫງົບສຸກ ປອດໄພບັນຫາຮ້າຍ ປີນີ້ເພີ່ນຈັດການບໍລິຫານໄດ້ ຫລາຍປະເດັນຄືກຍ່ຍົກ 300 ຖັງວາງເປັນຈຸດເພື່ອໄວ້ ໃຫ້ຖິ້ມຂີ້ເຫຍື້ອເປັນລະບຽບຮຽບຮ້ອຍ ***ຫລາຍຄົນຍ້ອງຊື່ນຊົມ.***

❊ ***ເພື່ອ***ສະແດງຄວາມຮູ້ບຸນຄຸນອັນໃຫຍ່ຫລວງ ***ສະພາແຫ່ງຊາດ*** ກະກຽມຈັດງານບຸນອຸທິດກຸສົນ ແດ່ອະດີດການນຳສະພາປະຊາຊົນສູງສຸດ ແລະ ສະພາແຫ່ງຊາດ ເນື່ອງໃນໂອກາດວັນຊາດທີ 2 ທັນວາ ທີ່ຈະມາເຖິງນີ້ 47 ປີເອກອ້າງ ***ຜົນງານໃຫຍ່ການນຳພາ*** ປອງປະຊາມີສຸກ ຮຸ່ງເຮືອງຈະເລີນກ້າວ ຄາວນີ້ຊົມຄອບແລ້ວ ການນຳພັກ-ລັດ ປອງປະຊາພ່ຳພ້ອມ ***ຈົ່ງນ້ອມສົ່ງສ່ວນກຸສົນ ບັ້ນບາ!***

❊ ***ກອງ***ປະຊຸມປະຈຳປີ 2022 ຂອງຄະນະເລຂາທິການສະພາແຫ່ງຊາດ ຈັດຂຶ້ນທີ ***7-8 ຜ່ານມາ*** ແລະອັດລົງດ້ວຍຜົນສຳເລັດອັນສະຫງ່າງາມ ຕາມແຜນການອາດໄວ້ ປັບປຸງວຽກເສນາທິການ ຫລາຍທ່ານນຳມາຍົກ ເພື່ອປັບປຸງແກ້ ວຽກທີ່ຍັງຄາລ້ອງ ທັງຜົນງານພົ້ນເດັ່ນ ເປັນບົດຮຽນຄ່າລ້ຳ ເພື່ອນຳໃຊ້ໃຫ້ເກີດຜົນ ***ຊົມເຊີຍ!***

## ຊວນຍິ້ມ

**# ແອ່ນຕຸ້ງ**

**ເລື່ອງ: ບໍ່ເຮັດຫຍັງກະຜິດບໍ່**

ມື້ໜຶ່ງ ບາງ ກູດ້ງອງ ຖາມນາຍຄູວ່າ

**ກູດ້ງອງ:** ເອື້ອຍຄູ ຄັນນ້ອງບໍ່ໄດ້ເຮັດຫຍັງ ກະຊິຖືກລົງໂທດຢູ່ຫວາ?

**ເອື້ອຍຄູ:** ບໍ່ ຄັນບໍ່ໄດ້ເຮັດຫຍັງ ໃຜຊິລົງໂທດເນາະ

**ກູດ້ງອງ:** ໄຄແດ່ຊັ້ນບ່າ ນ້ອງບໍ່ໄດ້ເຮັດວຽກບ້ານທີ່ເອື້ອຍຄູໃຫ້ວານນີ້

**ເອື້ອຍຄູ:** ໂອຍໆໆ!!!



## ຄະຕິເຕືອນໃຈ

**# ດອກສະຍອມ**

ໃຜຜູ້ມີຄວາມຮູ້ ເຕັມພຸງພຽງປາກ ກໍ່ຕາມທ້ອນ
ສອນໂຕເອງບໍ່ໄດ້ ໃຜຊິຍ້ອງວ່າດີ

# ກົດໝາຍວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່

ຕໍ່ຈາກສະບັບກ່ອນ...

**ມາດຕາ 43 ຫຼັກການກ່ຽວກັບການສ້າງຖານຂໍ້ມູນ-ຂ່າວສານ ພູມສາດແຫ່ງຊາດ**

ການສ້າງຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ໃຫ້ປະຕິບັດຕາມ ຫຼັກການ ດັ່ງນີ້:

1. ຮັບປະກັນຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງຂໍ້ມູນ-ຂ່າວສານ ພູມສາດ ທີ່ເກັບກຳຈາກກະຊວງ, ອົງການຂອງລັດ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ, ສອດຄ່ອງກັບມາດ ຕະຖານເຕັກນິກທີ່ປະກາດ ໃຊ້ໃນແຕ່ລະໄລຍະ;

2. ຮັບປະກັນການປັບປຸງຢ່າງເປັນປົກກະຕິ ເພື່ອຕອບສະໜອງຄວາມ ຮຽກຮ້ອງຕ້ອງການໃນການຄຸ້ມຄອງລັດ, ການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

3. ຮັບປະກັນການຄຸ້ມຄອງໄພພິບັດ, ການກູ້ຊີບ, ການກູ້ໄພ ແລະ ການ ຮັບມືກັບການປ່ຽນແປງຂອງດິນຟ້າອາກາດ;

4. ອຳນວຍຄວາມສະດວກໃຫ້ແກ່ການບໍລິການສາທາລະນະ ແລະ ສາ ມາດເຊື່ອມໂຍງກັບໂຄງສ້າງຂໍ້ມູນ ຂ່າວສານ ພູມສາດຂອງບັນດາປະເທດໃນອະ ນຸພາກພື້ນ, ພາກພື້ນ ແລະ ສາກົນ.

**ໝວດທີ 3**
**ການບໍລິການ ແລະ ການນຳໃຊ້ ຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ**

**ມາດຕາ 44 ການບໍລິການຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ**

ການບໍລິການຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ມີ ດັ່ງນີ້:

1. ການແລກປ່ຽນ, ການປັບປຸງ, ການວິເຄາະ, ການປະມວນ, ການຄົ້ນ ຫາ ແລະ ການຖອດຂໍ້ມູນ;

2. ການບໍລິການເຂົ້າເຖິງຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ.

**ມາດຕາ 45 ການນຳໃຊ້ຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ**

ກະຊວງ, ອົງການຂອງລັດ ແລະ ອົງການປົກຄອງທ້ອງຖິ່ນ ທີ່ນຳໃຊ້ງົບ ປະມານຂອງລັດ ເຂົ້າໃນການສ້າງ ຫຼື ປັບປຸງນະໂຍບາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ຕ້ອງນຳໃຊ້ຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ສາມາດນຳໃຊ້ຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ເຂົ້າ ໃນການຜະລິດ, ການດຳເນີນທຸລະກິດ ແລະ ການເຄື່ອນ ໄຫວວຽກງານຂອງຕົນ.

ການນຳໃຊ້ຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ຕ້ອງສອດຄ່ອງກັບກົດ ໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 46 ສຳນວນຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ**

ສຳນວນຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ປະກອບດ້ວຍ:

1. ຂອບເຂດ, ການຈັດຕັ້ງທີ່ຮັບຜິດຊອບ, ຜູ້ສ້າງ, ວັນທີ, ເດືອນ, ປີ ສ້າງ, ດັດແກ້ ແລະ ເກັບກຳຂໍ້ມູນ;

2. ຄວາມສອດຄ່ອງກັບມາດຕະຖານ ແລະ ລະບຽບການທາງດ້ານເຕັກນິກ;

3. ຄຸນນະພາບ ແລະ ຄຸນຄ່າຂໍ້ມູນທາງດ້ານກົດໝາຍ; ຂໍ້ມູນອື່ນທີ່ກ່ຽວຂ້ອງ.

**ພາກທີ V**
**ການຄຸ້ມຄອງ ເຄື່ອງມື, ຂໍ້ມູນ ສຳຫຼວດວັດແທກ ແລະ ສ້າງແຜນທີ່ ແລະ ໂຄງລ່າງພື້ນຖານສຳຫຼວດວັດແທກ**

**ໝວດທີ 1**
**ການຄຸ້ມຄອງເຄື່ອງມື ສຳຫຼວດວັດແທກ ແລະ ສ້າງແຜນທີ່**

**ມາດຕາ 47 ການຂຶ້ນທະບຽນເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ຄອບຄອງ ແລະ ນຳໃຊ້ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢູ່ ສປປ ລາວ ຕ້ອງນຳເອົາເຄື່ອງມືດັ່ງກ່າວມາກວດກາເຕັກ ນິກ ແລະ ຂຶ້ນທະບຽນ ນຳກະຊວງພາຍໃນ ຕາມລະບຽບການ ເປັນຕົ້ນ ເຄື່ອງ ວັດແທກຮັບສິ່ງສັນຍານດາວທຽມ ດ້ວຍລະບົບດາວທຽມນຳພາທາງໂລກ (GNSS), ເຄື່ອງບັນທຶກຖ່າຍພາບພື້ນດິນ (Laser scanner), ອຸປະກອນຖ່າຍ ພາບທາງອາກາດ, ເຄື່ອງສຳຫຼວດວັດແທກພື້ນນ້ຳ (Echo Sounder), ເຄື່ອງ ວັດແທກລະດັບສູງ (Digital Level), ເຄື່ອງວັດແທກປະມວນຜົນ (Total Station), ເຄື່ອງວັດແທກແຮງດຶງດູດຂອງໜ່ວຍໂລກ, ເຄື່ອງກວດກາປັບແກ້ ເຄື່ອງວັດແທກປະມວນຜົນ (Calibration).

**ມາດຕາ 48 ການກວດກາເຕັກນິກ, ການປັບແກ້ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່**

ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງໄດ້ຮັບການກວດກາ ທາງດ້ານເຕັກນິກ ແລະ ປັບແກ້ຕາມມາດຕະຖານເຕັກນິກການສຳຫຼວດວັດ ແທກ ແລະ ສ້າງແຜນທີ່ ທີ່ກະຊວງພາຍໃນ ວາງອອກແຕ່ລະໄລຍະ ແລະ ຄູ່ມື ເຕັກນິກຂອງຜູ້ຜະລິດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການກວດກາເຕັກນິກ, ປັບແກ້, ທົດລອງ ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງໄດ້ຂໍອະນຸຍາດນຳກະຊວງພາຍ ໃນ ແລະ ຕ້ອງລາຍງານຜົນຂອງການກວດກາເຕັກນິກ ຕໍ່ກະຊວງພາຍໃນ.

ກະຊວງພາຍໃນ ຫຼື ຜູ້ດຳເນີນການກວດກາເຕັກນິກ ເປັນຜູ້ອອກໃບ ຢັ້ງຢືນຄວາມຖືກຕ້ອງທາງດ້ານເຕັກນິກ ຂອງເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ຕົນໄດ້ກວດກາຜ່ານ, ປັບແກ້ແລ້ວ.

**ມາດຕາ 49 ການບໍລິການ, ການຈຳໜ່າຍ ແລະ ການນຳໃຊ້ເຄື່ອງມືສຳຫຼວດວັດ ແທກ ແລະ ສ້າງແຜນທີ່**

ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ນຳມາໃຫ້ບໍລິການ, ຈຳ ໜ່າຍ ແລະ ນຳໃຊ້ສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງມີຄູ່ມືເຕັກນິກຂອງ ຜູ້ຜະລິດ, ໃບຢັ້ງຢືນຄວາມຖືກຕ້ອງດ້ານເຕັກນິກ ທີ່ກະຊວງພາຍໃນ ຫຼືຜູ້ດຳ ເນີນການກວດກາເຕັກນິກອອກໃຫ້.

**ມາດຕາ 50 ການນຳເຂົ້າ-ສົ່ງອອກ ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳເຂົ້າ-ສົ່ງອອກ ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງຂໍອະນຸຍາດນຳກະຊວງອຸດ ສາຫະກຳ ແລະ ການຄ້າ ໂດຍໄດ້ຮັບການເຫັນດີຈາກກະຊວງພາຍໃນ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການ ກ່ຽວກັບການນຳເຂົ້າ-ສົ່ງອອກ.

**ໝວດທີ 2**
**ການຄຸ້ມຄອງຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່**

**ມາດຕາ 51 ການກວດກາ ແລະ ຢັ້ງຢືນ ຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່**

ຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ຈາກການເຄື່ອນໄຫວ ສຳຫຼວດວັດແທກຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ເພື່ອສ້າງແຜນທີ່ ຕ້ອງຜ່ານການກວດກາ ແລະ ຢັ້ງຢືນຄຸນນະພາບ ແລະ ຄວາມຖືກຕ້ອງ ຈາກກະຊວງພາຍໃນ ຕາມມາດ ຕະຖານເຕັກນິກຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ວາງອອກໃນແຕ່ ລະໄລຍະ.

**ມາດຕາ 52 ມາດຕະຖານເຕັກນິກຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່**

ກະຊວງພາຍໃນ ເປັນຜູ້ສ້າງມາດຕະຖານເຕັກນິກຂໍ້ມູນສຳຫຼວດວັດ ແທກ ແລະ ສ້າງແຜນທີ່ ໂດຍສອດຄ່ອງ ກັບການຂະຫຍາຍຕົວຂອງວິທະຍາ ສາດ-ເຕັກໂນໂລຊີ ໃນແຕ່ລະໄລຍະ, ສອດຄ່ອງກັບລະບົບຂໍ້ມູນເຄົ້າການວັດ ແທກແຫ່ງຊາດ, ມາດຕະຖານເຕັກນິກການສຳຫຼວດວັດແທກແຕ່ລະຂັ້ນ ແລະ ມາດຕະຖານເຕັກນິກການສ້າງແຜນທີ່ແຕ່ລະມາດຕາສ່ວນ.

**ມາດຕາ 53 ການກວດກາຄຸນນະພາບຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່**

ການກວດກາຄຸນນະພາບຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃຫ້ ປະຕິບັດ ດັ່ງນີ້:

1. ກວດກາຕາມຂໍ້ມູນທີ່ໄດ້ສຳຫຼວດວັດແທກ, ພາບຖ່າຍ, ແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດ ໂດຍອີງຕາມມາດຕະຖານເຕັກນິກ ກ່ຽວກັບ ການສຳຫຼວດວັດແທກ ແລະ ສ້າງແຜນທີ່, ຂໍ້ມູນ ຂ່າວສານ ພູມສາດທີ່ປະກາດ ໃຊ້ໃນແຕ່ລະໄລຍະ;

2. ກວດກາຂໍ້ມູນ ແລະ ຜະລິດຕະພັນ ການສຳຫຼວດວັດແທກ ແລະ ສ້າງແຜນທີ່ ເປັນຕົ້ນ ພາບຖ່າຍ, ແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດ ທີ່ຜະ ລິດຢູ່ພາຍໃນປະເທດ ຫຼື ນຳເຂົ້າ ເພື່ອຈຳໜ່າຍ ຊຶ່ງຕ້ອງຮັບປະກັນທາງດ້ານຄຸນ ນະພາບ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງມີຄວາມຮັບຜິດຊອບໃນການກວດກາຄຸນນະພາບຂໍ້ມູນຂອງວຽກງານດັ່ງ ກ່າວ ຄື:

1. ຮັບຜິດຊອບຕໍ່ການກວດກາຄຸນນະພາບຂໍ້ມູນ ທີ່ໄດ້ສຳຫຼວດວັດ ແທກ, ພາບຖ່າຍ, ແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດທີ່ຕົນສ້າງຂຶ້ນ;

2. ຮັບຜິດຊອບຕໍ່ການຕິດຕາມ ກວດກາຄຸນນະພາບ ແລະ ຮັບຮອງ ຜະລິດຕະພັນທີ່ໄດ້ຈາກການສຳຫຼວດວັດແທກ, ພາບຖ່າຍ, ແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດ ທີ່ຕົນສ້າງຂຶ້ນ.

ກະຊວງ, ອົງການຂອງລັດທີ່ກ່ຽວຂ້ອງ ເປັນຜູ້ປະກາດໃຊ້ມາດຕະຖານ ເຕັກນິກ ກ່ຽວກັບການກວດກາຄຸນນະພາບຂໍ້ມູນສຳຫຼວດວັດແທກ ແລະ ສ້າງ ແຜນທີ່, ພາບຖ່າຍ, ແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດ ທີ່ຢູ່ໃນຄວາມຮັບ ຜິດຊອບຂອງຕົນ.

ກະຊວງພາຍໃນ ເປັນຜູ້ກຳນົດລະບຽບການ, ມາດຕະຖານເຕັກນິກ ກ່ຽວກັບການກວດກາ ແລະ ຢັ້ງຢືນຄຸນນະພາບຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່, ຜະລິດຕະພັນການສຳຫຼວດວັດແທກ, ພາບຖ່າຍ, ແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດ.

ກະຊວງພາຍໃນ ເປັນຜູ້ກວດກາ ແລະ ຮັບຮອງ ຂໍ້ມູນສຳຫຼວດວັດ ແທກ ແລະ ສ້າງແຜນທີ່, ແຜນທີ່ວຽກສະເພາະ ທີ່ມີການພົວພັນກັບເສັ້ນຊາຍ ແດນລະຫວ່າງຊາດ ແລະ ເຂດແດນເຊື່ອມຕໍ່.

**ມາດຕາ 54 ການກວດກາ ແລະ ດັດແກ້ຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່**

ກະຊວງພາຍໃນ ເປັນຜູ້ກວດກາຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນ ທີ່ ທີ່ໄດ້ຈາກການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕາມການອະນຸຍາດຂອງ ຕົນ ແລະ ລົງກວດກາຢູ່ພາກສະໜາມ ເພື່ອກວດກາການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ຮັບອະນຸຍາດ.

ໃນກໍລະນີ ມີຂໍ້ຜິດພາດ ກ່ຽວກັບຂໍ້ມູນສຳຫຼວດວັດແທກ ແລະ ສ້າງ ແຜນທີ່, ກະຊວງພາຍໃນ ຕ້ອງໃຫ້ຄຳແນະນຳເປັນລາຍລັກອັກສອນ ເພື່ອໃຫ້ ດັດແກ້ຂໍ້ຜິດພາດດັ່ງກ່າວ. ພາຍຫຼັງໄດ້ໃຫ້ຄຳແນະນຳແລ້ວ ຫາກຍັງເຫັນວ່າ ບຸກ ຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ ບໍ່ດັດແກ້ ຕາມກຳນົດເວລາທີ່ ໄດ້ແນະນຳ ໃຫ້ກະຊວງພາຍໃນ ດັດແກ້ຂໍ້ຜິດພາດດັ່ງກ່າວ ແລະ ໃຫ້ບຸກຄົນ, ນິ ຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງນັ້ນ ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ.

**ມາດຕາ 55 ການນຳເຂົ້າ, ສົ່ງອອກ ຂໍ້ມູນ, ຜະລິດຕະພັນສຳຫຼວດວັດແທກ ແລະ ສ້າງແຜນທີ່**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳເຂົ້າ-ສົ່ງອອກ ຂໍ້ມູນ, ຜະລິດຕະພັນ ສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງຂໍອະນຸຍາດນຳ ກະຊວງພາຍໃນ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການ ກ່ຽວກັບການ ນຳເຂົ້າ-ສົ່ງອອກ.

**ມາດຕາ 56 ລິຂະສິດ ກ່ຽວກັບຂໍ້ມູນ ແລະ ຜະລິດຕະພັນສຳຫຼວດວັດແທກ ແລະ ສ້າງແຜນທີ່**

ຂໍ້ມູນ ແລະ ຜະລິດຕະພັນສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໃຊ້ງົບປະມານຂອງລັດ ຫຼື ໄດ້ຮັບການຊ່ວຍເຫຼືອລ້າ ຈາກຕ່າງປະເທດ,

ອ່ານຕໍ່ສະບັບໜ້າ...




## ບຸນທາດຫລວງ ກັບພິທີກຳທີ່ຄວນສຶກສາ

ໂດຍ: ດັ້ນກົບເມກ

ສັງຄົມລາວເຮົາ ນັບຖືພຸດທະສາສະໜາ ບວກກັບຄວາມເຊື່ອໄສຍະສາດ ແລະ ບັນດາຄວາມເຊື່ອເລື່ອງຜີຕ່າງໆທີ່ປົນກັນມາຍາວນານ ເຮັດໃຫ້ຄົນເຮົາຜູ້ທີ່ບໍ່ໄດ້ສຶກສາລົງເລິກແຍກອອກຍາກວ່າອັນໃດເປັນຄວາມເຊື່ອ ເລື່ອງຜີ ຫລືວ່າພຸດ ແລະ ພາມ (ໄສຍະສາດ) ເລື່ອງຂອງຄວາມເຊື່ອໃນສາສະໜາ ຫລື ລັດທິໃດໜຶ່ງນີ້ ເປັນສິດຂອງສ່ວນບຸກຄົນ ບໍ່ສາມາດຫ້າມກັນໄດ້ ແຕ່ກໍຄວນລະວັງສາກົນເຂົາກໍຖືສຳຄັນ ບໍ່ເອົາຄວາມເຊື່ອຂອງສາສະໜາໃດໜຶ່ງມາສະແດງຫລິ້ນດັ່ງກໍລະນີເປັນກະແສ ເລື່ອງຜີນຸ່ງຖືແບບຄູບາ.

ບຸນທາດຫລວງກໍເຊັ່ນດຽວກັນ ທີ່ມີຄວາມສຳຄັນຕໍ່ຊາດ-ສາສະໜາ ເປັນມິ່ງຂວັນຂອງຊາດລາວ ຄົນລາວເຮັດບຸນທາດຫລວງຖືກເດືອນ 12 ເພັງ ມື້ກ່ອນມີຫາງສຽງ ເລື່ອງຂະບວນແຫ່ຜູ້ຍິງນັ່ງເທິງຕັ່ງ ແລະ ກໍມີຜາສາດເຜິ້ງແຫ່ຕາມຫລັງ ການແຫ່ຫາມຜູ້ຍິງນັ່ງເທິງຕັ່ງອ້ອມທາດຫລວງພາຍໃນກົມມະລຽນ ເກີດເປັນຫາງສຽງວົງກວ້າງ ຫລາຍຄົນບອກວ່າ ບໍ່ເໝາະສົມ ເພາະຖືວ່າບໍ່ເຄີຍມີປະເພນີຖືປະຕິບັດ ເຮັດໃຫ້ກຸ່ມບຸກຄົນດັ່ງກ່າວ ອອກມາຊີ້ແຈງຂໍໂທດຕໍ່ສັງຄົມ ເພາະເຮັດໄປພຽງແຕ່ຢາກເຊີດຊູ ວັດທະນະທຳການແຕ່ງກາຍທີ່ງົດງາມ, ທັດສະນະສ່ວນຕົວຂອງຜູ້ຂຽນເຫັນວ່າ: ຫລັກການ ຫລື ບຸນ ແລະ ປະເພນີ ອັນໃດທີ່ມັນມີເຫດຜົນດີ ຖືກປະຕິບັດມາຍາວນານ ກໍບໍ່ຄວນປ່ຽນແປງ ແລະ ອັນໃດໃໝ່ ທີ່ເກີດຂຶ້ນ ແຕ່ບໍ່ເໝາະສົມກໍບໍ່ຄວນນຳມາປະຕິບັດ. ດັ່ງນັ້ນ, ເລື່ອງຫລາຍເລື່ອງທີ່ເກີດຂຶ້ນມັນຮຽກຮ້ອງການຈັດຕັ້ງກ່ຽວຂ້ອງອອກມາຊີ້ແຈງ.

ການເຊີດຊູ-ສ້າງສັນສິລະປະ-ວັດທະນະທຳ ດ້ານໃດໜຶ່ງ ມັນຕ້ອງການຄວາມຮູ້ແນ່ນອນຈະແຈ້ງ (ສຶກສາ, ວິໄຈແຈ່ມແຈ້ງກ່ອນລົງມືປະຕິບັດ) ຖ້າຂາດຄວາມຮູ້ວິຊາການເລິກເຊິ່ງເຖິງຖອງ ກໍຈະເກີດຂໍ້ຜິດພາດໄດ້, ພ້ອມນີ້ ຜູ້ຂຽນຍັງເຫັນເຂົາເວົ້າເຖິງພິທີກຳແຫ່ຂອງເຜົ່າບາງເຜົ່າ ເພື່ອບູຊາທາດຫລວງ ລວມເຖິງການແຕ່ງກາຍວ່າ ຖ້າເຮົາມີຂອງເກົ່າດີຢູ່ແລ້ວກໍບໍ່ແມ່ນຈະເຫັນແກ່ໂຕທີ່ຂາດເຫດຜົນຢາກແຕ່ງໃໝ່ແບບໃດກໍແຕ່ງ.

ຍົກຕົວຢ່າງ: ພິທີກຳແຫ່ທັ່ງບັ້ງ ຜູ້ຂຽນເຄີຍອ່ານອາຈານມະຫາສີລາ ວີລະວົງ ອະທິບາຍເປັນກອນວ່າ: ຂ້າທັ່ງບັ້ງ ຕ່ອຍເກິ່ງຕີກັບ..., ພິທີກຳແບບນີ້ ຖ້າປະຕິບັດມາຍາວນານ ຕັ້ງແຕ່ເກີດທາດຫລວງ ເຮົາກໍບໍ່ຄວນປ່ຽນຕາມໃຈມັກ. ຜູ້ຂຽນເຫັນວ່າຄົນລາວເຮົາມີຜູ້ເຂົ້າຮູ້ຢູ່ ແຕ່ຫາກປະໝາດ ບໍ່ຢາກຖາມ-ບໍ່ຢາກເຊີດຊູເຂົາ ວ່າແຕ່ເຮັດເປັນເຮັດໄດ້ກໍລົງມືຈອດໂລດ! ຫລືບໍ່ດັ່ງນັ້ນ ກໍຈະມີນັກວິຊາການແບບກຸ້ມໆເກີນໆອອກແບບ ຂໍແລກປ່ຽນນຳກັນເດີ້!




## ຕົວຢ່າງທີ່ດີ

**# ໂດຍ: ປ່າວກະປື**

**ຜົວ:** "ທີ່ຮັກ, ອ້າຍເຊີນໝູ່ມາກິນເຂົ້າແລງຢູ່ເຮືອນນຳໃດ"
**ເມຍ:** "ແມ່ນຫຍັງເກາະ ? ເຈົ້າບ້າຫວະ?, ເຮືອນຮົກບໍ່ຮົກ, ຕະຫຼາດຂ້ອຍບໍ່ໄດ້ໄປ, ຖ້ວຍບ່ວງກໍເປື້ອນເປິ ແລ້ວຂ້ອຍກໍບໍ່ມີຈິດມີໃຈຊິຄົວໃຫ້ໃຜກິນອີກເນີ".
**ຜົວ:** "ເລື່ອງນັ້ນອ້າຍຮູ້ໝົດແລ້ວ"
**ເມຍ:** "ຄັນຮູ້ ເປັນຫຍັງເຈົ້າຈຶ່ງເຊີນໝູ່ມາກິນເຂົ້າແລງນຳ"
**ຜົວ:** "ເຊີນກໍເພາະວ່າ ບັກເພື່ອນໂງ່ຄົນນັ້ນ ມັນພວມຄຶດຊິແຕ່ງດອງຊັ້ນໜາ".

## ASKING FOR HELP

**# By: BAOKBU**

**Husband:** "Honey, I invite a friend home for supper"
**Wife:** "What? are you crazy? The house is a mess, I didn't go shopping, all the dishes are dirty, and I don't feel like cooking meal!"
**Husband:** "I know all that"
**Wife:** "Then why did you invite a friend for supper?
**Husband:** "Because the poor fool's thinking about getting married."







ທະນາຄານພັດທະນາລາວ LDB Bank

ທະນາຄານພົງສະຫວັນ Phongsavanh BANK

# ອີຢູ ສະແດງຄວາມກັງວົນຕໍ່ ກົດໝາຍຫລຸດຜ່ອນອັດຕາເງິນເຟີ້



CNBC ລາຍງານວ່າ: ສະຫະພາບເອີຣົບ (ອີຢູ) ມີຄວາມເປັນຫ່ວງຢ່າງຍິ່ງຕໍ່ກົດໝາຍວ່າດ້ວຍການຫລຸດຜ່ອນອັດຕາເງິນເຟີ້ຂອງສະຫະລັດອາເມລິກາ ເຊິ່ງເຫັນວ່າ ເປັນການລະເມີດກົດໝາຍການຄ້າສາກົນ.

ລາຍງານກ່າວວ່າ: ສະມາຊິກສະພາຜູ້ແທນລາສະດອນອາເມລິກາໄດ້ອະນຸມັດຮ່າງກົດໝາຍວ່າດ້ວຍການໃຊ້ຈ່າຍດ້ານພາສີ, ການເບິ່ງແຍງສຸຂະພາບ ແລະ ການປ່ຽນແປງດິນຟ້າອາກາດໃນເດືອນສິງຫາຜ່ານມາ ເຊິ່ງລວມມີນະໂຍບາຍກ່ຽວກັບດິນຟ້າອາກາດ ແລະ ພະລັງງານ ເປັນວົງເງິນ 3,69 ຕື້ໂດລາ ແລະ ຍັງປະກອບມີໂຄງການສິນເຊື່ອພາສີສໍາລັບຍານພາຫະນະໄຟຟ້າ ທີ່ຜະລິດໃນອາເມລິກາເໜືອ ແລະ ສະໜັບສະໜູນລະບົບຕ່ອງໂສ້ການສະໜອງແບັດເຕີລີຂອງສະຫະລັດອາເມລິກາ.

ເຈົ້າໜ້າທີ່ເອີລົບຮັບຮູ້ຄໍາໝັ້ນສັນຍາດ້ານສິ່ງແວດລ້ອມຂອງຮ່າງກົດໝາຍດັ່ງກ່າວ ແຕ່ເຂົາເຈົ້າມີຄວາມກັງວົນກ່ຽວກັບທິດທາງຂອງແຮງຈູງໃຈທາງດ້ານການເງິນພາຍໃຕ້ກົດໝາຍ, ໂດຍກ່າວວ່າ ອີຢູ ໄດ້ກໍານົດ 9 ກົດໝາຍສິນເຊື່ອອາກອນທີ່ມີບັນຫາ.

ທ່ານ ວາລດິສ ດອມບຣອບສະກິສ ປະທານການຄ້າອີຢູ ກ່າວວ່າ: "ພວກເຮົາໄດ້ສ້າງຕັ້ງຄະນະເຮັດວຽກ ເພື່ອແກ້ໄຂບັນຫາເຫລົ່ານີ້ ແລະ ພວກເຮົາໄດ້ສຸມໃສ່ການຊອກຫາວິທີແກ້ໄຂການເຈລະຈາ ພວກເຮົາຫວັງວ່າອາເມລິກາຈະພ້ອມກັນແກ້ໄຂຄວາມກັງວົນຂອງອີຢູ".

**ແຫລ່ງຂ່າວ: CNBC**

# ສານສູງສຸດອິນເດຍ ພິພາກສາຍືນກົດໝາຍ ຈັດສັນໂກຕາ ສໍາລັບຜູ້ທຸກຍາກ



ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ໃນວັນທີ 7 ພະຈິກຜ່ານມາ ສານສູງສຸດອິນເດຍ ພິພາກສາຍືນກົດໝາຍຈັດສັນໂກຕາ ໃນການຮຽນມະຫາວິທະຍາໄລ ແລະ ການເຮັດວຽກເປັນລັດຖະກອນໃຫ້ແກ່ຄົນທຸກຍາກຈໍານວນ 10% ນອກຈາກໂກຕາ 49,5% ສໍາລັບກຸ່ມຄົນດ້ອຍໂອກາດທາງສັງຄົມ, ກຸ່ມຕາມຊັ້ນວັນນະ, ກຸ່ມຊົນເຜົ່າ ເພື່ອເຮັດໃຫ້ຄົນທຸກຍາກ ແລະ ວັນນະສູງເພິ່ງພໍໃຈ.

ຜູ້ພິພາກສາ 3 ທ່ານ (ໃນຈໍານວນ 5 ທ່ານ) ກ່າວວ່າ: ໂກຕາສໍາລັບຄົນທຸກຍາກເນື່ອງຈາກພື້ນຖານເສດຖະກິດ ບໍ່ເປັນການລະເມີດໂຄງສ້າງພື້ນຖານ ແລະ ລັດຖະທໍາມະນູນຂອງອິນເດຍ ທັງໄດ້ຢືນຢັນການດໍາເນີນການຂອງລັດຖະບານ. ສ່ວນຜູ້ພິພາກສາທີ່ຄັດຄ້ານ 2 ທ່ານ ກ່າວວ່າ: ກົດໝາຍ ໄດ້ທໍາລາຍ ໂຄງປະກອບຄວາມຍຸຕິທໍາຂອງສັງຄົມ ເນື່ອງຈາກວ່າບໍ່ໄດ້ກວມເອົາກຸ່ມທີ່ຖືກຍົກເວັ້ນຈາກສັງຄົມໃນອະດີດ.

ທັງນີ້, ອິນເດຍໄດ້ອອກກົດໝາຍປີ 1950 ສໍາລັບຜູ້ທີ່ຢູ່ລະດັບວັນນະຕໍ່າສຸດ ທີ່ຖືກຈໍາແນກຝັງເລິກ ເພື່ອພະຍາຍາມແກ້ໄຂຄວາມບໍ່ຍຸຕິທໍາ ແລະ ໃຫ້ພື້ນຖານການແຂ່ງຂັນກັບຜູ້ດ້ອຍໂອກາດທີ່ເກີດຈາກປະເພນີ.

ໃນເບື້ອງຕົ້ນ, ລັດຖະບານຄິດວ່າກົດໝາຍຈະແກ່ຍາວເຖິງ 10 ປີ, ແຕ່ກົດໝາຍໄດ້ຖືກປັບປຸງເພື່ອຂະຫຍາຍເວລາອອກໄປ ແລະ ໃນປີ 1988 ໂກຕາໄດ້ຖືກຂະຫຍາຍເພື່ອໃຫ້ກວມເອົາຜູ້ທຸກຍາກໃນຊັ້ນວັນນະສູງ.

ຕໍ່ມາ, ໃນເດືອນມັງກອນ 2019, ລັດຖະບານຂອງທ່ານ ນາເຣນດຣາ ໂມດີ ນາຍົກລັດຖະມົນຕີອິນເດຍໄດ້ປັບປຸງກົດໝາຍເພື່ອຈັດສັນໂກຕາໃຫ້ແກ່ບັນດາຂະແໜງການທີ່ທຸກຍາກ ຫລື ມີຄວາມບອບບາງທາງດ້ານເສດຖະກິດ ເຊິ່ງລາຍໄດ້ປະຈໍາປີຂອງຄອບຄົວຫລຸດລົງຕໍ່າກວ່າຂີດຈໍາກັດທີ່ຕ້ອງເສຍພາສີ.

ການຕັດສິນກ່ຽວກັບກົດໝາຍໂກຕາຢູ່ສານສູງສຸດຂອງອິນເດຍໄດ້ເຮັດໃຫ້ນັກວິຈານໂຕ້ຖຽງກັນວ່ານີ້ແມ່ນເລືອກປະຕິບັດ ເນື່ອງຈາກວ່າບໍ່ອະນຸຍາດໃຫ້ເຂົ້າເຖິງກຸ່ມຊັ້ນວັນນະທີ່ມີລະບົບໂກຕາແລ້ວ ແລະ ກົງກັນຂ້າມກັບຄໍາຕັດສິນຂອງສານຂັ້ນຕົ້ນໃນປີ 1991 ທີ່ຈໍາກັດເພດານໂກຕາຢູ່ທີ່ 50%, ກົດໝາຍໃໝ່ໄດ້ເພີ່ມເພດານເປັນ 59,5%.

ລັດຖະບານອິນເດຍໄດ້ຕອບໂຕ້ວ່າ ເປັນໜ້າທີ່ຂອງລັດໃນການປົກປ້ອງຜົນປະໂຫຍດຂອງຂະແໜງການເສດຖະກິດ-ສັງຄົມທີ່ບອບບາງກວ່າ ແລະ ຊ່ວຍປະຊາຊົນໃຫ້ພົ້ນຈາກຄວາມທຸກຍາກ.

**ແຫລ່ງຂ່າວ: BBC**

**ຜູ້ຊີ້ນໍາ**
ທ່ານ ສິງຄໍາ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄໍາວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ
ທ່ານ ເປຄໍາ ລໍຄໍາສອນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອໍາພັນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ